ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 033 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30.01.2015

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ ( ສະບັບປັບປຸງ )

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 010/ສພຊ, ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 033/ຄປຈ, ລົງວັນທີ 22 ສິງຫາ 2014.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1.** ປະກາດໃຊ້ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ ( ສະບັບປັບປຸງ ).

**ມາດຕາ 2.** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 010 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 23 ກໍລະກົດ 2014

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 23 ກໍລະກົດ 2014

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 52 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 23 ກໍລະກົດ 2014

# ກົດໝາຍ
# ວ່າດ້ວຍ ອາກອນມູນຄ່າເພີ່ມ (ສະບັບປັບປຸງ)
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານອາກອນມູນຄ່າເພີ່ມ ເພື່ອຊຸກຍູ້ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການ, ການລົງທຶນ ແລະ ການສົ່ງອອກ ແນໃສ່ເພີ່ມລາຍຮັບເຂົ້າງົບປະມານແຫ່ງລັດ, ສ້າງເງື່ອນໄຂ ໃຫ້ແກ່ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2(ປັບປຸງ) ອາກອນມູນຄ່າເພີ່ມ**

ອາກອນມູນຄ່າເພີ່ມ ແມ່ນ ອາກອນທີ່ເກັບຈາກການຊົມໃຊ້ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ ຊຶ່ງມີການເກັບ ແລະ ການມອບຢູ່ຫຼາຍຂອດແບບຕໍ່ອງໂສ້ ໂດຍແມ່ນຜູ້ຊົມໃຊ້ສຸດທ້າຍເປັນຜູ້ຈ່າຍ.

**ມາດຕາ 3(ປັບປຸງ) ອົງປະກອບຂອງລະບົບອາກອນມູນຄ່າເພີ່ມ**

ອົງປະກອບຂອງລະບົບອາກອນມູນຄ່າເພີ່ມ ປະກອບດ້ວຍ ຫຼັກການປະຕິບັດ, ລະບຽບການກ່ຽວກັບການເຂົ້າໃນລະບົບອາກອນມູນຄ່າເພີ່ມ, ການຖືບັນຊີ, ການນໍາໃຊ້ໃບເກັບເງິນ, ການຄິດໄລ່, ການແຈ້ງ, ການມອບ, ການຫັກ ແລະ ການສົ່ງຄືນ ເງິນອາກອນມູນຄ່າເພີ່ມ.

ມາດຕາ 4(ປັບປຸງ) ການອະທິບາຍຄໍາສັບ

**ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ສິນຄ້າ** ໝາຍເຖິງ ສິ່ງທີ່ບໍ່ມີຕົວຕົນ ຫຼື ມີຕົວຕົນ ຊຶ່ງສາມາດເຄື່ອນຍ້າຍໄດ້ ລວມທັງ ຊັບຄົງທີ່ ແລະ ຊັບສິນບັດອື່ນ ທີ່ໃຊ້ເຂົ້າໃນການຜະລິດ, ການຂາຍ, ການແລກປ່ຽນ ແລະ ການບໍລິການ;

2. **ການສົ່ງອອກ** ໝາຍເຖິງ ການສົ່ງສິນຄ້າອອກຈາກ ສປປ ລາວ ໄປຕ່າງປະເທດ ລວມທັງສົ່ງອອກໄປ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

3. **ການນໍາເຂົ້າ** ໝາຍເຖິງ ການນໍາເອົາສິນຄ້າຈາກຕ່າງປະເທດເຂົ້າມາ ສປປ ລາວ ລວມທັງການນໍາເຂົ້າສິນຄ້າ ຈາກເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

4. **ການຂາຍ** ໝາຍເຖິງ ການມອບ, ການໂອນສິດຊົມໃຊ້ສິນຄ້າ ຫຼື ການບໍລິການໃຫ້ແກ່ຜູ້ອື່ນໂດຍໄດ້ຮັບ ຄ່າຕອບແທນເປັນເງິນ ຫຼື ຜົນປະໂຫຍດອື່ນ ລວມທັງການໃຫ້ລ້າ ແລະ ການຊົມໃຊ້ດ້ວຍຕົນເອງ;

5. **ການບໍລິການ** ໝາຍເຖິງ ການເຄື່ອນໄຫວທຸລະກິດທີ່ເປັນການສະໜອງແຮງງານໃຫ້ແກ່ຜູ້ອື່ນ ຫຼື ຕົນເອງ ໂດຍໄດ້ຮັບຄ່າບໍລິການເປັນຄ່າຕອບແທນ ຊຶ່ງອາດມີ ວັດຖຸປະກອນ ແລະ ພາຫະນະຮັບໃຊ້;

6. **ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ** ໝາຍເຖິງ ຈໍານວນເງິນອາກອນມູນຄ່າເພີ່ມທີ່ຜູ້ມອບອາກອນມູນຄ່າເພີ່ມໄດ້ຈ່າຍ ຈາກການນໍາເຂົ້າສິນຄ້າ ຫຼື ການຊື້ສິນຄ້າ ຫຼື ການບໍລິການ ຢູ່ພາຍໃນປະເທດ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ;

7. **ອາກອນມູນຄ່າເພີ່ມເບື້ອງສົ້ນອອກ** ໝາຍເຖິງ ຈໍານວນເງິນອາກອນມູນຄ່າເພີ່ມທີ່ຄິດໄລ່ເກັບຈາກການ ຂາຍສິນຄ້າ ຫຼື ບໍລິການ ຊຶ່ງຈ່າຍໂດຍຜູ້ຊື້ສິນຄ້າ ຫຼື ຜູ້ຊົມໃຊ້ການບໍລິການ;

8. **ໄລຍະມອບອາກອນມູນຄ່າເພີ່ມ** ໝາຍເຖິງ ໄລຍະໜຶ່ງເດືອນ ທີ່ຜູ້ມອບອາກອນມູນຄ່າເພີ່ມ ຕ້ອງແຈ້ງ ແລະ ມອບອາກອນມູນຄ່າເພີ່ມທັງໝົດ ທີ່ຕິດພັນກັບການເຄື່ອນໄຫວດໍາເນີນທຸລະກິດໃນເດືອນດັ່ງກ່າວ;

9. **ຜູ້ທີ່ບໍ່ມີພູມລໍາເນົາ** ໝາຍເຖິງ ຜູ້ທີ່ບໍ່ມີທີ່ຢູ່ຖາວອນ ໃນການດໍາລົງຊີວິດ, ທໍາມາຫາກິນ ແລະ ດໍາເນີນທຸລະກິດ ຢູ່ ສປປ ລາວ;

10. **ຜູ້ມອບອາກອນມູນຄ່າເພີ່ມ** ໝາຍເຖິງ ຜູ້ດໍາເນີນທຸລະກິດທີ່ໄດ້ຂຶ້ນທະບຽນຢູ່ໃນລະບົບອາກອນມູນຄ່າເພີ່ມ;

11. **ຜະລິດຕະພັນສໍາເລັດຮູບ** ໝາຍເຖິງ ວັດຖຸທີ່ໄດ້ຜ່ານຂະບວນການຜະລິດອອກມາເປັນ ຜະລິດຕະພັນສົມບູນ ທີ່ສາມາດຊົມໃຊ້ໄດ້;

12. **ເລືອດຄົນ ໝາຍເຖິງ** ຜະລິດຕະພັນຈາກເລືອດຄົນ ແລະ ນໍ້າເລືອດ ທີ່ໄດ້ຮັບການຢັ້ງຢືນຈາກອົງການແພດວ່າມີຄຸນນະພາບ;

13. **ອັດຕາສູນສ່ວນຮ້ອຍ ( 0% ) ໝາຍເຖິງ** ອັດຕາທີ່ຮຽກເກັບອາກອນມູນຄ່າເພີ່ມ ຕາມການສົ່ງອອກສິນຄ້າ ແຕກຕ່າງຈາກການຍົກເວັ້ນ ເພາະການນໍາໃຊ້ອັດຕາສູນ ສາມາດຂໍຄືນເງິນ

ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າໄດ້, ສຳລັບການຍົກເວັ້ນນັ້ນ ບໍ່ມີສິດຂໍຫັກອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າໄດ້.

**ມາດຕາ 5( ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ**

ລັດ ວາງນະໂຍບາຍກ່ຽວກັບອາກອນມູນຄ່າເພີ່ມ ເພື່ອຊຸກຍູ້ ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການ, ການລົງທຶນ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ພັດທະນາລະບົບການແຈ້ງເສຍ, ການມອບ ແລະ ການຈັດເກັບອາກອນມູນຄ່າເພີ່ມໃຫ້ມີຄວາມສະດວກ, ທັນສະໄໝ ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ໃຫ້ຂະແໜງການຂອງລັດ ດ້ວຍການປະກອບ ບຸກຄະລາກອນ, ງົບປະມານ, ພື້ນຖານໂຄງລ່າງ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ຕາມຄວາມສາມາດໃນແຕ່ລະໄລຍະ.

ລັດ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ຜູ້ປະກອບການ ໃນການເສຍອາກອນມູນຄ່າເພີ່ມ.

**ມາດຕາ 6(ໃໝ່) ຫຼັກການກ່ຽວກັບວຽກງານອາກອນມູນຄ່າເພີ່ມ**

**ໃນການເຄື່ອນໄຫວວຽກງານອາກອນມູນຄ່າເພີ່ມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:**

1. ຮັບປະກັນການຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ຮັບປະກັນການສົ່ງເສີມ ການຜະລິດສິນຄ້າ, ການບໍລິການ, ການລົງທຶນ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ;
3. ຮັບປະກັນຄວາມທັນສະໄໝ, ບໍລິການສະດວກ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້;
4. ຮັບປະກັນການປະສານສົມທົບຢ່າງກົມກຽວ ລະຫວ່າງການຄຸ້ມຄອງຕາມສາຍຕັ້ງ ແລະ ສາຍຂວາງ;
5. ຮັບປະກັນການປະຕິບັດພັນທະ ກ່ຽວກັບຂໍ້ຕົກລົງ, ສັນຍາ, ສົນທິສັນຍາ ຂອງພາກພື້ນ ແລະ ສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 7(ປັບປຸງ) ພັນທະ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຊົມໃຊ້ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ລ້ວນແຕ່ ມີພັນທະເສຍອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 8(ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ, ທຳມາຫາກິນ ແລະ ດຳລົງຊີວິດ ທີ່ຊົມໃຊ້ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ເປີດກວ້າງ ແລະ ສົ່ງເສີມ ໃຫ້ມີການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະສາກົນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ດ້ວຍການຖອດຖອນບົດຮຽນ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຈັດເກັບອາກອນມູນຄ່າເພີ່ມ, ການພັດທະນາຊັບພະຍາກອນມະນຸດ, ການຍົກລະດັບວິຊາການ, ການເກັບກຳ ແລະ ການແລກປ່ຽນ ຂໍ້ມູນ ຂ່າວສານ ເພື່ອເຮັດໃຫ້ວຽກງານອາກອນມູນຄ່າເພີ່ມມີການພັດທະນາດີຂຶ້ນ ແລະ ປະຕິບັດສັນຍາສາກົນ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ເນື້ອໃນພື້ນຖານກ່ຽວກັບອາກອນມູນຄ່າເພີ່ມ
## ໝວດທີ 1
## ຂອບເຂດຂອງອາກອນມູນຄ່າເພີ່ມ

**ມາດຕາ 10(ໃໝ່) ຜູ້ມີໜ້າທີ່ເກັບອາກອນມູນຄ່າເພີ່ມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ຫຼື ຜູ້ຖືກມອບໝາຍຈາກລັດຖະການສ່ວຍສາອາກອນ ເປັນຜູ້ມີໜ້າທີ່ເກັບອາກອນມູນຄ່າເພີ່ມ ຈາກຜູ້ຊົມໃຊ້ ສິນຄ້າ ແລະ ການບໍລິການ ແລ້ວນຳໄປມອບເຂົ້າງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 11(ປັບປຸງ) ສິນຄ້າ ແລະ ການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ**

ສິນຄ້າ ແລະ ການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ມີ ສິນຄ້າທີ່ນຳເຂົ້າມາໃນດິນແດນຂອງ ສປປ ລາວ, ສິນຄ້າ ແລະ ການບໍລິການ ທີ່ສະໜອງຢູ່ໃນດິນແດນຂອງ ສປປ ລາວ, ການບໍລິການ ຂອງຜູ້ທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ ແລະ ການບໍລິການ ຂອງນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ໄດ້ສ້າງຕັ້ງ ຢູ່ ສປປ ລາວ ຍົກເວັ້ນສິນຄ້າ ແລະ ການບໍລິການທີ່ໄດ້ກຳນົດໄວ້ໃນມາດຕາ 12 ແລະ ມາດຕາ 16 ຂໍ້ 2 ຂອງກົດໝາຍສະບັບນີ້.

**ມາດຕາ 12(ປັບປຸງ) ສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ**

ສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ ມີ ດັ່ງນີ້:

1. ການນຳເຂົ້າ, ການຂາຍ ພືດກະສິກຳ ທີ່ຍັງບໍ່ທັນໄດ້ຜ່ານການປຸງແຕ່ງ ຫຼື ຜ່ານການປຸງແຕ່ງຂັ້ນຕົ້ນ ເປັນຕົ້ນ ການຝານ, ການປົດ, ການອົບ, ການສີເອົາເປືອກອອກ, ການເອົາເມັດອອກ;
2. ການຂາຍສັດທຸກປະເພດທີ່ມີຊີວິດ ຫຼື ບໍ່ມີຊີວິດ ທັງເປັນໂຕ ຫຼື ເປັນສິ້ນສ່ວນ ທີ່ຍັງບໍ່ທັນຜ່ານການປຸງແຕ່ງ ຫຼື ຜ່ານການປຸງແຕ່ງຂັ້ນຕົ້ນ ເປັນຕົ້ນ ສິ້ນສ່ວນ ທີ່ຢູ່ໃນສະພາບສົດ ຫຼື ຮັກສາສະພາບໄວ້ບໍ່ໃຫ້ເນົ່າເປື່ອຍ;

3. ການບໍລິການປູກ ຕົ້ນໄມ້ໃຫ້ເປັນປ່າ, ຕົ້ນໄມ້ອຸດສາຫະກຳ, ຕົ້ນໄມ້ໃຫ້ໝາກ ແລະ ຕົ້ນໄມ້ເປັນຢາ;

4. ການນຳເຂົ້າ, ການຂາຍ ແນວພັນພືດທຸກປະເພດ, ແນວພັນສັດ, ທີ່ອາຫານສັດ, ຢາວັກຊີນ, ວັດຖຸດິບຮັບໃຊ້ ການຜະລິດທີ່ອາຫານສັດ ແລະ ການຜະລິດຢາວັກຊີນ;

5. ວັດຖຸດິບທີ່ນຳໃຊ້ເຂົ້າໃນການຜະລິດຝຸ່ນ, ອຸດສາຫະກຳປຸງແຕ່ງຜະລິດຕະພັນ ກະສິກຳ, ຝຸ່ນຊີວະພາບ, ຝຸ່ນວິທະຍາສາດ, ຢາປາບສັດຕູພືດ ທີ່ບໍ່ເປັນອັນຕະລາຍຕໍ່ລະບົບນິເວດ, ສຸຂະພາບ ແລະ ຊີວິດ ຂອງຄົນ ແລະ ສັດ;

6. ການນຳເຂົ້າ, ການຂາຍ ອຸປະກອນ ແລະ ເຄື່ອງກົນຈັກ ຮັບໃຊ້ວຽກງານກະສິກຳ;

7. ການນຳເຂົ້າທາດເຄມີ ເພື່ອການຄົ້ນຄວ້າ, ການທົດລອງ, ການວິໄຈວິທະຍາສາດ ຂອງອົງການຈັດຕັ້ງລັດ ແລະ ຮັບໃຊ້ໃຫ້ແກ່ການວິໄຈ, ການທົດລອງ ຂອງຜູ້ດຳເນີນທຸລະກິດທີ່ໄດ້ຮັບອະນຸຍາດຈາກລັດ;

8. ການນຳເຂົ້າ ແລະ ການຂາຍ ສະແຕັມອາກອນ ຫຼື ສະແຕັມໄປສະນີ;

9. ການນຳເຂົ້າເຮືອບິນ ແລະ ວັດຖູປະກອນ ຮັບໃຊ້ການຂົນສົ່ງທາງອາກາດ ທັງພາຍໃນ ແລະ ຕ່າງປະເທດ;

10.ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນອື່ນ ເພື່ອຮັບໃຊ້ການບໍລິການຂົນສົ່ງສາກົນທາງອາກາດ ແລະ ການບໍລິການຂາຍສິນຄ້າໃນເຮືອບິນທີ່ບໍລິການຂົນສົ່ງສາກົນທາງອາກາດ;

11.ການນຳເຂົ້າສິນຄ້າ ເພື່ອນຳໃຊ້ໃນວຽກງານທາງລັດຖະການ ຂອງສະຖານທູດ, ອົງການຈັດຕັ້ງສາກົນ ທີ່ປະຈຳ ຢູ່ ສປປ ລາວ ຕາມຂໍ້ຕົກລົງ, ສັນຍາສາກົນ ແລະ ຕາມການອະນຸຍາດຂອງກະຊວງທີ່ກ່ຽວຂ້ອງ;

12.ການນຳເຂົ້າ, ການຂາຍປຶ້ມແບບຮຽນ, ແບບສອນ, ອຸປະກອນຮັບໃຊ້ການຮຽນ, ການສອນທີ່ທັນສະໄໝ ເປັນຕົ້ນ ຄອມພິວເຕີ, ໂປຣເຈັກເຕີ ແລະ ອຸປະກອນການສຶກສາທີ່ທັນສະໄໝ ເພື່ອຈຸດປະສົງຮັບໃຊ້ ການສິດສອນ ທີ່ໄດ້ຮັບອະນຸຍາດຈາກກະຊວງທີ່ກ່ຽວຂ້ອງ;

13. ໜັງສືພິມ, ວາລະສານການເມືອງ, ລາຍການໂທລະພາບ, ວິທະຍຸກະຈາຍສຽງ ທີ່ເຜີຍແຜ່ແນວທາງນະໂຍບາຍ ແລະ ຮັບໃຊ້ໜ້າທີ່ການເມືອງ ຂອງລັດ ບໍ່ມີລັກສະນະທຸລະກິດ;

14. ກິດຈະການບໍລິການກ່ຽວກັບການສຶກສາ ເປັນຕົ້ນ ໂຮງລ້ຽງເດັກ, ໂຮງຮຽນອະນຸບານ, ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມ, ໂຮງຮຽນວິຊາຊີບ, ສູນຝຶກອົບຮົມວິຊາຊີບ, ວິທະຍາໄລ, ວິທະຍາຄານ ແລະ ມະຫາວິທະຍາໄລ;

15. ດອກເບ້ຍເງິນຝາກ, ດອກເບ້ຍເງິນກູ້ຈາກການເຄື່ອນໄຫວຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດ ຈາກທະນາຄານ ແຫ່ງ ສປປ ລາວ;

16.ການນຳເຂົ້າຄຳແທ່ງ ເພື່ອຄ້ຳປະກັນການພິມທະນະບັດ ແລະ ການນຳເຂົ້າທະນະບັດ ເປັນເຈັ້ຍ ຫຼື ເປັນໂລຫະ ໂດຍທະນາຄານ ແຫ່ງ ສປປ ລາວ ຫຼື ຜູ້ໄດ້ຮັບມອບສິດ ຈາກທະນາຄານ ແຫ່ງ ສປປ ລາວ;

17. ກິດຈະການປະກັນໄພ ສຸຂະພາບ, ຊີວິດ, ສັດລ້ຽງ ແລະ ຕົ້ນໄມ້ປູກ;

18. ການບໍລິການກວດ, ປິ່ນປົວ ແລະ ວິໄຈ ພະຍາດ ຄົນ ແລະ ສັດ;

19. ການນຳເຂົ້າ, ການຂາຍ ຢາພື້ນເມືອງ, ຢາປິ່ນປົວສັດ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຄົນ ຫຼື ສັດ, ເລືອດຄົນ, ອຸປະກອນ, ລໍ້ ຮັບໃຊ້ຄົນເຈັບ, ຄົນພິການ ແລະ ຜູ້ອາວຸໂສ;

20. ການນຳເຂົ້າ, ການຂາຍ ເຄື່ອງມື, ອຸປະກອນການແພດ, ເຄື່ອງວິເຄາະຕ່າງໆ ເພື່ອຮັບໃຊ້ບໍລິການສັງຄົມ ຂອງບັນດາໂຮງໝໍ, ສຸກສາລາ;

21. ການນຳເຂົ້າຍານພາຫະນະຮັບໃຊ້ວຽກງານວິຊາສະເພາະ, ເຄື່ອນໄຫວຮັບໃຊ້ສາທາລະນະປະໂຫຍດ ເປັນຕົ້ນ ລົດດັບເພີງ, ລົດຮັບສົ່ງຄົນເຈັບ, ລົດສ້ອມແປງ, ລົດຖ່າຍທອດໂທລະພາບ, ວິທະຍຸ ແລະ ລົດວິຊາສະເພາະອື່ນຂອງຂະແໜງການລັດ ແລະ ອົງການຈັດຕັ້ງສັງຄົມ;

22. ລົດຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຍົກເວັ້ນລົດຮັບໃຊ້ວຽກງານບໍລິຫານ;

23. ການນຳເຂົ້າເຄື່ອງຮັບໃຊ້ບາງປະເພດ ແລະ ຂອງຂວັນ ຂອງນັກສຶກສາ, ລັດຖະກອນ, ນັກການທູດ ທີ່ສຳເລັດວຽກງານຢູ່ຕ່າງປະເທດ ແລະ ຄົນຕ່າງປະເທດ ທີ່ມີຈຸດປະສົງຍົກຍ້າຍມາຢູ່ແບບຖາວອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ຍົກເວັ້ນວັດຖຸສິ່ງຂອງທີ່ໄດ້ຈາກການສືບທອດມູນມໍຣະດົກ;

24. ສິນຄ້າ ແລະ ການບໍລິການ ທີ່ສະໜອງໃຫ້ແກ່ໂຄງການຊ່ວຍເຫຼືອລ້າ ຊຶ່ງໄດ້ກຳນົດໄວ້ໃນສັນຍາ, ສົນທິສັນຍາ, ຂໍ້ຜູກພັນທີ່ລັດຖະບານເຊັນກັບຕ່າງປະເທດ.

ບັນຊີລະອຽດກ່ຽວກັບສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການຄິດໄລ່ອາກອນມູນຄ່າເພີ່ມ

### ມາດຕາ 13 (ປັບປຸງ) ວິທີການຄິດໄລ່ອາກອນມູນຄ່າເພີ່ມ

ວິທີການຄິດໄລ່ອາກອນມູນຄ່າເພີ່ມ ມີ ດັ່ງນີ້:

1. ວິທີການຄິດໄລ່ອາກອນມູນຄ່າເພີ່ມ ແມ່ນ ເອົາພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ ຄູນອັດຕາອາກອນມູນຄ່າເພີ່ມ;

2. ວິທີການຄິດໄລ່ອາກອນມູນຄ່າເພີ່ມທີ່ຕ້ອງມອບ ແມ່ນ ເອົາອາກອນມູນຄ່າເພີ່ມເບື້ອງສົ້ນອອກ ລົບ ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ;

3. ວິທີການຄິດໄລ່ອາກອນມູນຄ່າເພີ່ມເບື້ອງສົ້ນອອກ ແມ່ນ ລາຄາຂາຍສິນຄ້າ ຫຼື ການບໍລິການ ຄູນ ອັດຕາອາກອນມູນຄ່າເພີ່ມ;

4. ວິທີການຄິດໄລ່ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ແມ່ນ ລາຄາຊື້ສິນຄ້າ ຫຼື ການບໍລິການ ຄູນ ອັດຕາອາກອນມູນຄ່າເພີ່ມ ຫຼື ຕາມໃບຮັບເງິນທີ່ຜູ້ຂາຍອອກໃຫ້.

### ມາດຕາ 14(ປັບປຸງ) ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ

ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ ມີ ດັ່ງນີ້:

1. ສຳລັບການນຳເຂົ້າສິນຄ້າມາຈາກຕ່າງປະເທດ ແມ່ນ ລາຄາຊື້-ຂາຍຕົວຈິງຮອດຊາຍແດນ (CIF) ບວກ ພາສີຂາເຂົ້າ ບວກອາກອນຊົມໃຊ້ (ຖ້າມີ);

2. ສຳລັບການຂາຍສິນຄ້າ ແລະ ການບໍລິການພາຍໃນປະເທດ ແມ່ນ ມູນຄ່າຂາຍສິນຄ້າ ແລະ ການບໍລິການ ບວກ ອາກອນຊົມໃຊ້ ( ຖ້າມີ ) ແຕ່ບໍ່ລວມອາກອນມູນຄ່າເພີ່ມ;

3. ສຳລັບການຊື້ການບໍລິການຈາກຜູ້ທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ ແມ່ນ ມູນຄ່າຊື້ການບໍລິການຕົວຈິງ ທີ່ບໍ່ລວມອາກອນມູນຄ່າເພີ່ມ;

4. ສຳລັບຜູ້ບໍ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ນຳເຂົ້າສິນຄ້າມາຈາກຕ່າງປະເທດ ແມ່ນ ລາຄາຊື້-ຂາຍຕົວຈິງຮອດຊາຍແດນ (CIF) ບວກ ພາສີຂາ ເຂົ້າ ບວກ ອາກອນຊົມໃຊ້ (ຖ້າມີ) ບວກກຳໄລລວມ.

ສຳລັບອັດຕາສ່ວນກຳໄລລວມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ກໍລະນີຜູ້ມອບອາກອນມູນຄ່າເພີ່ມ ມີລາຍຮັບສຳຮອງ ກໍໃຫ້ລວມເຂົ້າເປັນພື້ນຖານຄິດໄລ່ອາກອນມູນຄ່າເພີ່ມອັນດຽວ. ຖ້າລາຍຮັບຈາກການດຳເນີນທຸລະກິດ ຫາກເປັນເງິນຕາຕ່າງປະເທດ ກໍຕ້ອງຄິດໄລ່ເປັນເງິນກີບ ຕາມອັດຕາແລກປ່ຽນທາງການ ຂອງ ສປປ ລາວ.

### ມາດຕາ 15( ປັບປຸງ) ການດັດແກ້ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ

ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ ຈະຖືກດັດແກ້ຕາມແຕ່ລະກໍລະນີ ດັ່ງນີ້:

1. ກໍລະນີ ລູກຄ້າສົ່ງສິນຄ້າ ຫຼື ຄ່າບໍລິການຄືນ ບາງສ່ວນ ຫຼື ທັງໝົດ;
2. ກໍລະນີ ຜູ້ດຳເນີນທຸລະກິດ ຍົກເລີກການຊື້ສິນຄ້າ ຫຼື ການບໍລິການ ຕາມພາຍຫຼັງ;
3. ກໍລະນີ ຜູ້ດຳເນີນທຸລະກິດ ໄດ້ມີການຫຼຸດ ຫຼື ເພີ່ມລາຄາສິນຄ້າ ຫຼື ການບໍລິການຕາມພາຍຫຼັງ.

ການດັດແກ້ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ ຕາມແຕ່ລະກໍລະນີທີ່ໄດ້ກຳນົດໄວ້ເທິງນີ້ ຈະຖືກປະຕິບັດໄດ້ກໍຕໍ່ເມື່ອຜູ້ຂາຍໄດ້ອອກໃບເກັບເງິນທີ່ມີອາກອນມູນຄ່າເພີ່ມ ແລະ ໄດ້ແຈ້ງຈຳນວນເງິນອາກອນມູນຄ່າເພີ່ມ ໄວ້ໃນໃບແຈ້ງມອບອາກອນມູນຄ່າເພີ່ມແລ້ວ.

### ມາດຕາ 16(ປັບປຸງ) ອັດຕາອາກອນມູນຄ່າເພີ່ມ

ອັດຕາອາກອນມູນຄ່າເພີ່ມ ມີ ດັ່ງນີ້:

1. ອັດຕາ ສິບສ່ວນຮ້ອຍ ( 10% ) ສຳລັບ ສິນຄ້າ ແລະ ການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ທີ່ນຳເຂົ້າ, ຜະລິດ, ຊົມໃຊ້ຢູ່ພາຍໃນ ສປປ ລາວ ລວມທັງການສົ່ງອອກຊັບພະຍາກອນທຳມະຊາດ ທີ່ບໍ່ແມ່ນຜະລິດຕະພັນສຳເລັດຮູບ;

2. ອັດຕາ ສູນສ່ວນຮ້ອຍ ( 0% ) ສຳລັບ ວັດຖຸດິບ, ສານເຄມີ, ວັດຖູປະກອນ, ເຄື່ອງຈັກ ແລະ ພາຫະນະການຜະລິດ ທີ່ເປັນຜະລິດຕະພັນ ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ຊຶ່ງ

ພາຍໃນຜະລິດບໍ່ໄດ້ ຫຼື ຜະລິດໄດ້ແຕ່ບໍ່ພຽງພໍ ເພື່ອນຳໃຊ້ເຂົ້າ ໃນການຜະລິດ ແລະ ການລົງທຶນທີ່ເປັນຊັບສິນບັດຄົງທີ່;

ສິນຄ້າ, ຊັບພະຍາກອນທຳມະຊາດ ທີ່ເປັນຜະລິດຕະພັນສຳເລັດຮູບ ທີ່ສົ່ງອອກຕ່າງປະເທດ.

ລາຍລະອຽດກ່ຽວກັບລາຍການໃນຂໍ້ 2 ຂອງມາດຕານີ້ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 17(ປັບປຸງ) ການຄິດໄລ່ເກັບອາກອນມູນຄ່າເພີ່ມ**

ການຄິດໄລ່ເກັບອາກອນມູນຄ່າເພີ່ມ ໃຫ້ປະຕິບັດ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການນຳເຂົ້າສິນຄ້າຈາກຕ່າງປະເທດ ໃຫ້ເກັບໃນເວລາແຈ້ງ ເສຍພາສີຂາເຂົ້າ;
2. ການຂາຍສິນຄ້າ ແລະ ການບໍລິການຢູ່ພາຍໃນປະເທດ ໃຫ້ເກັບໃນເວລາມີການຂາຍສິນຄ້າ ແລະ ການບໍລິການ;
3. ສິນຄ້າ ແລະ ການບໍລິການ ທີ່ຊົມໃຊ້ດ້ວຍຕົນເອງ ແລະ ການໃຫ້ລ້າ ໃຫ້ເກັບໃນເວລາມີການນຳໃຊ້ຕົວຈິງ ຫຼື ໃນເວລາທີ່ມີການໂອນ ຫຼື ມອບກຳມະສິດ;
4. ການຊື້ການບໍລິການ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງຢູ່ ສປປ ລາວ ໃຫ້ຫັກ ແລະ ເກັບເງິນອາກອນມູນຄ່າເພີ່ມໄວ້ໃນເວລາມີການເບີກຈ່າຍເງິນໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ.

**ມາດຕາ 18(ໃໝ່) ກຳນົດເວລາຄິດໄລ່ເກັບອາກອນມູນຄ່າເພີ່ມຄືນ**

ເຈົ້າໜ້າທີ່ສ່ວຍສາອາກອນ ສາມາດຄິດໄລ່ເກັບອາກອນມູນຄ່າເພີ່ມຄືນຍ້ອນຫຼັງໄດ້ ພາຍໃນກຳນົດເວລາສາມປີ ນັບແຕ່ວັນໄດ້ຂາຍສິນຄ້າ ແລະ ການບໍລິການ ທີ່ມີອາກອນມູນຄ່າເພີ່ມເກີດຂຶ້ນ ຫາກເຫັນວ່າມີຫຼັກຖານຢັ້ງຢືນຊັດເຈນ ແລະ ຂໍ້ມູນພຽງພໍ.

ອາກອນມູນຄ່າເພີ່ມທີ່ຄິດໄລ່ເກັບຄືນນັ້ນ ຕ້ອງມອບພາຍໃນກຳນົດ ສິບວັນ ນັບແຕ່ວັນເຈົ້າໜ້າທີ່ ສ່ວຍສາອາກອນໄດ້ອອກໃບສັ່ງມອບ ເປັນຕົ້ນໄປ.

## ໝວດທີ 3
## ການຫັກ, ການສົ່ງຄືນ ແລະ ການມອບ ອາກອນມູນຄ່າເພີ່ມ

**ມາດຕາ 19(ໃໝ່) ຜູ້ມີສິດຫັກອາກອນມູນຄ່າເພີ່ມເບື້ອງສິນເຂົ້າ**

ຜູ້ມີສິດຫັກອາກອນມູນຄ່າເພີ່ມເບື້ອງສິນເຂົ້າ ແມ່ນ ຜູ້ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

**ມາດຕາ 20( ປັບປຸງ) ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າທີ່ອະນຸຍາດຫັກໄດ້**

ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າທີ່ສາມາດຫັກໄດ້ ແມ່ນ ອາກອນມູນຄ່າເພີ່ມຂອງຜູ້ຢູ່ໃນລະບົບອາກອນມູນຄ່າເພີ່ມ ດັ່ງນີ້:

1. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າທັງໝົດ ທີ່ຕິດພັນກັບສິນຄ້າ ຫຼື ການບໍລິການ ທີ່ນຳໃຊ້ໂດຍກົງເຂົ້າໃນການຜະລິດ, ທຸລະກິດ ຫຼື ການບໍລິການ ສຳລັບທຸລະກິດທີ່ຖືກເສຍອາກອນມູນຄ່າເພີ່ມ ຍົກເວັ້ນສິນຄ້າ ແລະ ການບໍລິການທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້;

2. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າຂອງນ້ຳມັນເຊື້ອໄຟ, ກະແສໄຟຟ້າ ແລະ ຊັບສິນບັດຄົງທີ່ ຊຶ່ງອະນຸຍາດໃຫ້ຫັກໄດ້ເປັນບາງສ່ວນ ຕາມການກຳນົດຂອງລັດຖະບານ;

3. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າຂອງຊັບພະຍາກອນທຳມະຊາດ ທີ່ຂາຍຢູ່ພາຍໃນປະເທດ;

4. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າຂອງສິນຄ້າ ແລະ ການບໍລິການ ທີ່ໄດ້ນຳໃຊ້ເຂົ້າໃນການດຳເນີນທຸລະກິດທີ່ຖືກເສຍ ແລະ ຖືກຍົກເວັ້ນ ອາກອນມູນຄ່າເພີ່ມ ຊຶ່ງອະນຸຍາດໃຫ້ຫັກອອກສະເພາະພູດສ່ວນທີ່ຖືກເສຍອາກອນມູນຄ່າເພີ່ມເທົ່ານັ້ນ.

**ມາດຕາ 21(ໃໝ່) ເງື່ອນໄຂຂອງການຫັກອາກອນມູນຄ່າເພີ່ມ**

ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າຂອງສິນຄ້າ ແລະ ການບໍລິການ ທີ່ສາມາດຫັກໄດ້ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ;

2. ການແຈ້ງເສຍອາກອນມູນຄ່າເພີ່ມເປັນປົກກະຕິແຕ່ລະເດືອນ ພ້ອມຄັດຕິດຕາຕະລາງສັງລວມການນຳໃຊ້ໃບເກັບເງິນທີ່ຕິດພັນກັບການຊື້ ແລະ ການຂາຍໃນເດືອນ ຕາມແບບພິມຂອງຂະແໜງການສ່ວຍສາອາກອນ;

3. ເອກະສານຢັ້ງຢືນການນຳເຂົ້າຂອງຂະແໜງການທີ່ກ່ຽວຂ້ອງ ພ້ອມໃບຮັບເງິນຂອງທະນາຄານ ຫຼື ຄັງເງິນ ທີ່ຢັ້ງຢືນເຖິງການມອບເງິນອາກອນມູນຄ່າເພີ່ມຢູ່ບ່ອນນຳເຂົ້າ;

4. ເອກະສານຢັ້ງຢືນການສົ່ງອອກ (ສຳລັບຜູ້ສົ່ງອອກ) ພ້ອມໃບເກັບເງິນທີ່ພົວພັນເຖິງການສົ່ງອອກ;

5. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າຕ້ອງຫັກຊ້າສຸດບໍ່ໃຫ້ກາຍ ຫົກເດືອນ ໂດຍເລີ່ມແຕ່ເດືອນທີ່ມີອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າເກີດຂຶ້ນ, ຖ້າກາຍກຳນົດດັ່ງກ່າວຫາກຍັງບໍ່ຖືກຫັກ ຫຼື ບໍ່ມີອາກອນເບື້ອງສົ້ນອອກທີ່ຈະເອົາມາຫັກ ຕ້ອງໃຫ້ຂະແໜງການສ່ວຍສາອາກອນບ່ອນຕົນຂຶ້ນກັບ ເພື່ອພິຈາລະນາອະນຸຍາດໃຫ້ ຫັກຕໍ່ ຫຼື ລົງເປັນລາຍຈ່າຍ .

**ມາດຕາ 22(ໃໝ່) ເອກະສານຢັ້ງຢືນໃນການຫັກອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ**

ເອກະສານຢັ້ງຢືນໃນການຫັກອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ມີ ດັ່ງນີ້:

1. ໃບເກັບເງິນທີ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳກ່ຽວກັບໃບເກັບເງິນ ສຳລັບການສົ່ງອອກ, ການຂາຍສິນຄ້າ ແລະ ການບໍລິການ ຢູ່ ພາຍໃນປະເທດ;

2. ໃບຮັບເງິນຂອງຄັງເງິນ ຫຼື ທະນາຄານສະບັບຕົ້ນ ສຳລັບສິນຄ້າທີ່ນຳເຂົ້າ ພ້ອມທັງເອກະສານຢັ້ງຢືນ ການນຳເຂົ້າ ຂອງຂະແໜງການທີ່ກ່ຽວຂ້ອງ;

3. ບັນຊີສຳຮອງຂອງທະນາຄານ ( ຖ້າມີຄວາມຈຳເປັນ ).

ຜູ້ມອບອາກອນມູນຄ່າເພີ່ມ ຕ້ອງປະກອບສຳນວນເອກະສານການຫັກເປັນແຕ່ລະເດືອນ ພ້ອມທັງ ເກັບຮັກສາເອກະສານຢັ້ງຢືນການຫັກ ແລະ ເອກະສານທີ່ກ່ຽວຂ້ອງໄວ້ເປັນເວລາສາມປີ ເພື່ອຢັ້ງຢືນ ຕໍ່ ເຈົ້າໜ້າທີ່ສ່ວຍສາອາກອນ ໃນເວລາມີການກວດກາ.

**ມາດຕາ 23(ປັບປຸງ) ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ**

ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ ແມ່ນ ອາກອນມູນຄ່າເພີ່ມ ທີ່ໄດ້ຈ່າຍໃນເວລານຳເຂົ້າສິນຄ້າ, ຊື້ສິນຄ້າ ແລະ ຊື້ການບໍລິການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ຂອງລາຍການທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້;

2. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າຂອງສິນຄ້າ ຫຼື ການບໍລິການ ທີ່ບໍ່ໄດ້ນຳໃຊ້ ໂດຍກົງເຂົ້າໃນການດຳເນີນທຸລະກິດ;

3. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າຂອງຊັບພະຍາກອນທຳມະຊາດ ທີ່ບໍ່ແມ່ນຜະລິດຕະພັນສຳເລັດຮູບ ທີ່ສົ່ງອອກໄປຕ່າງປະເທດ;

4. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າທີ່ໄດ້ຮັບການຫັກ ຫຼື ສົ່ງຄືນແລ້ວ;

5. ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ຂອງສິນຄ້າ ແລະ ການບໍລິການ ທີ່ບໍ່ມີເງື່ອນໄຂ ຫຼື ມີເງື່ອນໄຂ ແຕ່ປະຕິບັດບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້ ຊຶ່ງໄດ້ແຈ້ງເຕືອນສາມຄັ້ງ ແລະ ຜູ້ກ່ຽວກໍໄດ້ເຊັນຮັບຮູ້ແລ້ວ.

**ມາດຕາ 24(ໃໝ່) ຜູ້ມີສິດຂໍເງິນອາກອນມູນຄ່າເພີ່ມຄືນ**

ຜູ້ມີສິດຂໍເງິນອາກອນມູນຄ່າເພີ່ມຄືນ ມີ ດັ່ງນີ້:

1. ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ສົ່ງອອກສິນຄ້າໄປຕ່າງປະເທດ;

2. ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ຄວບກິດຈະການ, ແຍກກິດຈະການ, ຢຸດເຊົາ ຫຼື ລົ້ມລະລາຍ ຕາມກົດໝາຍ;

3. ຜູ້ໂດຍສານ ແລະ ນັກທ່ອງທ່ຽວຕ່າງປະເທດ ທີ່ຊື້ສິນຄ້າ ຢູ່ ສປປ ລາວ ແລະ ນຳສິນຄ້າດັ່ງກ່າວ ໄປຊົມໃຊ້ ຢູ່ຕ່າງປະເທດ ໂດຍຜ່ານດ່ານສະໜາມບິນສາກົນ ຂອງ ສປປ ລາວ;

4. ອົງການຈັດຕັ້ງສາກົນທີ່ຂຶ້ນກັບ ແລະ ບໍ່ຂຶ້ນກັບລັດຖະບານ, ສະຖານທູດ, ສະຖານກົງສູນ ແລະ ນັກການທູດ ຕາມການຢັ້ງຢືນເຫັນດີຂອງກະຊວງການຕ່າງປະເທດ;

5. ບຸກຄົນ, ນິຕິບຸກຄົນ ທີ່ຖືກຄິດໄລ່ໃຫ້ເສຍອາກອນມູນຄ່າເພີ່ມຊ້ຳຫຼາຍເທື່ອ ຫຼື ຫຼາຍກວ່າຈຳນວນອາກອນມູນຄ່າເພີ່ມທີ່ເກີດຂຶ້ນຕົວຈິງ.

**ມາດຕາ 25(ປັບປຸງ) ການສົ່ງຄືນເງິນອາກອນມູນຄ່າເພີ່ມ**

ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ລັດອະນຸຍາດໃຫ້ສົ່ງຄືນ ມີດັ່ງນີ້:

1. ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າ ຂອງລາຍການທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ທີ່ຕິດພັນກັບສິນຄ້າສົ່ງອອກໄປຕ່າງປະເທດ;

2. ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າຂອງຊັບພະຍາກອນທຳມະຊາດ ທີ່ເປັນຜະລິດຕະພັນສຳເລັດຮູບ ສົ່ງອອກໄປຕ່າງປະເທດ;

3. ອາກອນມູນຄ່າເພີ່ມໃນເບື້ອງສິ້ນເຂົ້າທີ່ຫັກບໍ່ໝົດໃນເດືອນຂອງພູດສ່ວນສິນຄ້າທີ່ສົ່ງອອກໄປຕ່າງປະເທດ;

4. ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ຍັງເຫຼືອ ຂອງສິນຄ້າ ຫຼື ການບໍລິການ ໃນເວລາຄວບກິດຈະການ, ແຍກກິດຈະການ, ຢຸດເຊົາກິດຈະການ ຫຼື ລົ້ມລະລາຍ ຕາມລະບຽບການ ແລະ ກົດໝາຍ;

5. ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າ ຂອງສິນຄ້າ ຫຼື ການບໍລິການ ທີ່ໄດ້ມອບເກີນຍ້ອນການຄິດໄລ່ ເກີນຈຳນວນທີ່ເກີດຂຶ້ນຕົວຈິງ ຫຼື ມີການຄິດໄລ່ຊ້ຳ;

6. ອາກອນມູນຄ່າເພີ່ມ ທີ່ຕິດພັນກັບການຊື້ສິນຄ້າ ຢູ່ ສປປ ລາວ ແລະ ໄດ້ນຳໄປໃຊ້ຢູ່ຕ່າງປະເທດ ຂອງນັກທ່ອງທ່ຽວ ແລະ ຜູ້ໂດຍສານຂາອອກຊາວຕ່າງປະເທດ, ອົງການຈັດຕັ້ງສາກົນທີ່ຂຶ້ນກັບ ແລະ ບໍ່ຂຶ້ນກັບລັດຖະບານ, ສະຖານທູດ, ສະຖານກົງສູນ ແລະ ນັກການທູດ.

ລັດ ຕ້ອງສົ່ງຄືນເງິນອາກອນມູນຄ່າເພີ່ມພາຍໃນ ໜຶ່ງເດືອນ ສຳລັບຜູ້ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ນັບແຕ່ວັນໄດ້ຮັບຄຳສະເໜີຂໍຄືນອາກອນມູນຄ່າເພີ່ມ ເປັນຕົ້ນໄປ.

ວິທີການ ແລະ ຂັ້ນຕອນ ການສົ່ງຄືນເງິນອາກອນມູນຄ່າເພີ່ມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 26(ໃໝ່) ເງື່ອນໄຂຂອງການສົ່ງຄືນເງິນອາກອນມູນຄ່າເພີ່ມ**

ການສົ່ງຄືນເງິນອາກອນມູນຄ່າເພີ່ມ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ສຳລັບຜູ້ດຳເນີນທຸລະກິດ ທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ມີການສົ່ງອອກສິນຄ້າ ແລະ ການບໍລິການໄປຕ່າງປະເທດ:

- ຖືບັນຊີຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ;
- ນຳໃຊ້ໃບເກັບເງິນຖືກຕ້ອງຕາມນິຕິກຳ ກ່ຽວກັບໃບເກັບເງິນ;
- ມີ ສັນຍາຊື້-ຂາຍທີ່ກ່ຽວຂ້ອງ, ເອກະສານຢັ້ງຢືນການສົ່ງອອກຢ່າງຖືກຕ້ອງ ແລະ ຄົບຖ້ວນ;
- ປະຕິບັດລະບອບການແຈ້ງ, ການມອບອາກອນມູນຄ່າເພີ່ມຖືກຕ້ອງ ແລະຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ສຳລັບຜູ້ມອບອາກອນທີ່ມີການຄວບກິດຈະການ, ແຍກກິດຈະການ, ຢຸດເຊົາກິດຈະການ:

- ສໍາລັບຜູ້ມອບອາກອນທີ່ມີການຄວບກິດຈະການ, ແຍກກິດຈະການ ຕ້ອງມີ ສັນຍາຮ່ວມທຸລະກິດ, ເອກະສານຢັ້ງຢືນການຄວບ, ແຍກກິດຈະການຈາກຂະແໜງການທີ່ກ່ຽວຂ້ອງ;

- ສໍາລັບການຢຸດເຊົາກິດຈະການ ຕ້ອງມີເອກະສານຢັ້ງຢືນການມອບພັນທະທີ່ຖືກຕ້ອງ ແລະ ຄົບຖ້ວນ ພ້ອມທັງເອກະສານຢັ້ງຢືນການຢຸດເຊົາຂອງຂະແໜງການທີ່ກ່ຽວຂ້ອງ;

- ສໍາລັບການລົ້ມລະລາຍ ຕ້ອງມີເອກະສານ ແລະ ຄໍາຕັດສິນຂອງສານ ກ່ຽວກັບການລົ້ມລະລາຍຂອງວິສາຫະກິດ.

3. ສໍາລັບເງື່ອນໄຂຂອງການສົ່ງຄືນເງິນອາກອນມູນຄ່າເພີ່ມ ໃຫ້ແກ່ສະຖານທູດ, ສະຖານກົງສູນ, ນັກການທູດ, ອົງການຈັດຕັ້ງສາກົນທີ່ຂຶ້ນກັບ ແລະ ບໍ່ຂຶ້ນກັບລັດຖະບານ, ນັກທ່ອງທ່ຽວ ແລະ ຜູ້ໂດຍສານຂາອອກຊາວຕ່າງປະເທດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ຜູ້ສະເໜີຂໍຄືນອາກອນມູນຄ່າເພີ່ມເບື້ອງສິນເຂົ້າ ແມ່ນບໍ່ໃຫ້ເກີນຫົກເດືອນ ນັບແຕ່ວັນທີ່ມີອາກອນມູນຄ່າເພີ່ມເບື້ອງສິນເຂົ້າ ເກີດຂຶ້ນ.

## ມາດຕາ 27(ໃໝ່) ການຂໍຄືນ ເງິນອາກອນມູນຄ່າເພີ່ມ

ການຂໍຄືນ ເງິນອາກອນມູນຄ່າເພີ່ມ ສາມາດດໍາເນີນໄດ້ເປັນແຕ່ລະເດືອນ ແລະ ບໍ່ໃຫ້ເກີນຫົກເດືອນ ນັບແຕ່ວັນທີ່ມີອາກອນມູນຄ່າເພີ່ມຕ້ອງຂໍຄືນ ເກີດຂຶ້ນ:

1. ຜູ້ດໍາເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຕ້ອງຍື່ນໃບສະເໜີຂໍຄືນເງິນອາກອນມູນຄ່າເພີ່ມເປັນແຕ່ລະເດືອນ ນັບແຕ່ວັນທີ່ມີອາກອນມູນຄ່າເພີ່ມເບື້ອງສິນເຂົ້າ ເກີດຂຶ້ນ;

2. ຜູ້ດໍາເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ມີການຄວບກິດຈະການ, ແຍກກິດຈະການ, ຢຸດເຊົາກິດຈະການ ຫຼື ລົ້ມລະລາຍ ຕ້ອງຍື່ນໃບສະເໜີຂໍຄືນພາຍຫຼັງມີການຕົກລົງຈາກຂະແໜງການທີ່ກ່ຽວຂ້ອງເປັນລາຍລັກອັກສອນແຕ່ບໍ່ໃຫ້ເກີນ ຫົກເດືອນ ນັບແຕ່ມີການຕົກລົງເປັນຕົ້ນໄປ.

ສໍາລັບ ນັກທ່ອງທ່ຽວ ແລະ ຜູ້ໂດຍສານຂາອອກຊາວຕ່າງປະເທດ, ສະຖານທູດ, ສະຖານກົງສູນ, ນັກການທູດ, ອົງການຈັດຕັ້ງສາກົນທີ່ຂຶ້ນກັບ ແລະ ບໍ່ຂຶ້ນກັບລັດຖະບານນັ້ນ ເວລາໃນການຂໍຄືນເງິນອາກອນມູນຄ່າເພີ່ມ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 28(ໃໝ່) ເອກະສານປະກອບການຂໍຄືນ ເງິນອາກອນມູນຄ່າເພີ່ມ

**ການຂໍຄືນ ເງິນອາກອນມູນຄ່າເພີ່ມ ໃຫ້ປະກອບເອກະສານ ດັ່ງນີ້:**

1. ສໍາລັບຜູ້ດໍາເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ:

- ໃບສະເໜີຂໍຄືນ ເງິນອາກອນມູນຄ່າເພີ່ມ ຕາມແບບພິມຂອງກະຊວງການເງິນ;
- ໃບແຈ້ງເສຍອາກອນມູນຄ່າເພີ່ມ ຂອງເດືອນທີ່ມີການຂໍຄືນ ເງິນອາກອນມູນຄ່າເພີ່ມ;
- ໃບຮັບເງິນຂອງຄັງເງິນ ຫຼື ໃບແຈ້ງມີ ຂອງທະນາຄານສະບັບຕົ້ນ ທີ່ຢັ້ງຢືນເຖິງການມອບອາກອນມູນຄ່າເພີ່ມໃນເດືອນທີ່ມີການຂໍຄືນ ເງິນອາກອນມູນຄ່າເພີ່ມ;

- ຕາຕະລາງສັງລວມການນຳໃຊ້ໃບເກັບເງິນເບື້ອງສິ້ນອອກ ແລະ ເບື້ອງສິ້ນເຂົ້າ ໃນໄລຍະການຂໍຄືນ ເງິນ ຕາມແບບພິມຂອງກະຊວງການເງິນ;

- ໃບເກັບເງິນ ແລະ ໃບຢັ້ງຢືນການນຳເຂົ້າ ແລະ ສົ່ງອອກ;

- ສັນຍາການຊື້-ຂາຍ ສິນຄ້າ ແລະ ການບໍລິການ.

2. ສຳລັບຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ມີການຄວບກິດຈະການ, ແຍກກິດຈະການ, ຢຸດເຊົາກິດຈະການ ຫຼື ລົ້ມລະລາຍ ຕາມແຕ່ລະກໍລະນີ ດັ່ງນີ້:

- ມີສັນຍາຮ່ວມທຸລະກິດ, ເອກະສານຢັ້ງຢືນການຄວບກິດຈະການ ຈາກຂະແໜງ ການທີ່ ກ່ຽວຂ້ອງ ສຳລັບການຄວບກິດຈະການ;

- ມີເອກະສານຢັ້ງຢືນການແຍກກິດຈະການ ຈາກຂະແໜງການທີ່ກ່ຽວຂ້ອງ ສຳລັບ ການແຍກກິດຈະການ;

- ມີເອກະສານຢັ້ງຢືນການມອບພັນທະທີ່ຖືກຕ້ອງ ແລະ ຄົບຖ້ວນ, ເອກະສານຢັ້ງ ຢືນການຢຸດເຊົາຂອງຂະແໜງການທີ່ກ່ຽວຂ້ອງ ສຳລັບການຢຸດເຊົາກິດຈະການ;

- ມີຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ສຳລັບ ການລົ້ມລະລາຍ.

3. ສຳລັບເອກະສານໃນການຂໍຄືນ ເງິນອາກອນມູນຄ່າເພີ່ມຂອງ ນັກທ່ອງທ່ຽວ, ຜູ້ໂດຍ ສານຂາອອກຊາວຕ່າງປະເທດ, ສະຖານທູດ, ສະຖານກົງສູນ, ນັກການທູດ, ອົງການຈັດຕັ້ງສາກົນທີ່ຂຶ້ນ ກັບ ແລະ ບໍ່ຂຶ້ນກັບລັດຖະບານນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

4. ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກຄິດໄລ່ໃຫ້ເສຍອາກອນມູນຄ່າ ເພີ່ມ ຊ້ຳຫຼາຍເທື່ອ ຫຼື ຫຼາຍກວ່າຈຳນວນອາກອນມູນຄ່າເພີ່ມ ທີ່ເກີດຂຶ້ນຕົວຈິງ ຕ້ອງມີ:

- ໃບສະເໜີຂໍຄືນ ເງິນອາກອນມູນຄ່າເພີ່ມ ຕາມແບບພິມຂອງກະຊວງການເງິນ;

- ໃບຮັບເງິນຂອງຄັງເງິນ ຫຼື ໃບແຈ້ງມີ ຂອງທະນາຄານສະບັບຕົ້ນ ທີ່ຢັ້ງຢືນເຖິງການ ມອບອາກອນມູນຄ່າເພີ່ມ ໃນເດືອນທີ່ມີການຂໍຄືນ ເງິນອາກອນມູນຄ່າເພີ່ມ;

- ໃບເກັບເງິນ ແລະ ເອກະສານຢັ້ງຢືນການຄິດໄລ່ເກີນ.

**ມາດຕາ 29(ໃໝ່) ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ບໍ່ອະນຸຍາດໃຫ້ສົ່ງຄືນ**

ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ບໍ່ອະນຸຍາດໃຫ້ສົ່ງຄືນ ມີ ດັ່ງນີ້:

- ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;

- ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າຂອງຊັບພະຍາກອນທຳມະຊາດ, ແຮ່ທາດ, ໄມ້ທຳ ມະຊາດ ທີ່ບໍ່ແມ່ນຜະລິດຕະພັນສຳເລັດຮູບສົ່ງອອກໄປຕ່າງປະເທດ;

- ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າ ທີ່ອະນຸຍາດໃຫ້ຫັກ ຫຼື ສົ່ງຄືນ ແຕ່ປະຕິບັດເງື່ອນໄຂ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26, 27 ແລະ 28 ຂອງກົດໝາຍສະບັບນີ້;

- ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າຂອງນ້ຳມັນເຊື້ອໄຟ ແລະ ກະແສໄຟຟ້າ ຍົກເວັ້ນກໍ ລະນີທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30(ປັບປຸງ) ອາກອນມູນຄ່າເພີ່ມທີ່ຕ້ອງມອບ ຫຼື ຍົກໄປຫັກໃນຄັ້ງຕໍ່ໄປ**

ອາກອນມູນຄ່າເພີ່ມທີ່ຕ້ອງມອບ ຫຼື ຍົກໄປຫັກໃນຄັ້ງຕໍ່ໄປ ແມ່ນຜົນລົບລະຫວ່າງອາກອນມູນຄ່າເພີ່ມໃນເບື້ອງສົ້ນອອກ ແລະ ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າທີ່ສາມາດຫັກໄດ້.

ໃນກໍລະນີອາກອນມູນຄ່າເພີ່ມເບື້ອງສົ້ນອອກ ຫຼາຍກວ່າອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ຖືວ່າມີອາກອນມູນຄ່າເພີ່ມຕ້ອງມອບຕື່ມ, ໃນກໍລະນີອາກອນມູນຄ່າເພີ່ມເບື້ອງສົ້ນອອກ ໜ້ອຍກວ່າອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ຖືວ່າມີອາກອນມູນຄ່າເພີ່ມທີ່ຕ້ອງໄດ້ຍົກໄປຫັກໃນຄັ້ງຕໍ່ໄປ.

## ພາກທີ III
## ການເຂົ້າໃນລະບົບອາກອນມູນຄ່າເພີ່ມ

**ມາດຕາ 31 ການເຂົ້າໃນລະບົບອາກອນມູນຄ່າເພີ່ມ**

ຜູ້ດຳເນີນທຸລະກິດທີ່ຕ້ອງເຂົ້າໃນລະບົບອາກອນມູນຄ່າເພີ່ມ ຕ້ອງມີເງື່ອນໄຂ ດັ່ງນີ້:

- ມີລາຍຮັບທຸລະກິດປະຈຳປີແຕ່ 400.000.000 ກີບ ຂຶ້ນໄປ;
- ຖືບັນຊີຕາມມາດຕະຖານການບັນຊີຂອງ ສປປ ລາວ ແລະ ການນຳໃຊ້ໃບເກັບເງິນຕາມແບບພິມຂອງກະຊວງການເງິນ;
- ໄດ້ຮັບການຝຶກອົບຮົມ ແລະແນະນຳທາງດ້ານວິຊາການ ກ່ຽວກັບອາກອນມູນຄ່າເພີ່ມ.

**ມາດຕາ 32 ລາຍຮັບທຸລະກິດປະຈຳປີຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດທີ່ມີລາຍຮັບປະຈຳປີແຕ່ 400.000.000 ກີບ ຂຶ້ນໄປ ຕ້ອງໄດ້ເຂົ້າໃນລະບົບອາກອນມູນຄ່າເພີ່ມ ນຳລັດຖະການສ່ວຍສາອາກອນບ່ອນຕົນຂຶ້ນກັບ.

ກໍລະນີລາຄາ ສິນຄ້າ ແລະ ການບໍລິການ ມີການເໜັງຕີງ ແຕ່ ຊາວສ່ວນຮ້ອຍ ຂຶ້ນໄປ ຫຼື ຖ້າມີຄວາມຈຳເປັນ ລັດຖະບານຈະເປັນຜູ້ດັດປັບລະດັບລາຍຮັບທຸລະກິດປະຈຳປີທີ່ໄດ້ກຳນົດໄວ້ໃນຂ້າງເທິງນີ້ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ແລ້ວສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 33 ມາດຕະຖານການຖືບັນຊີ ແລະ ການນຳໃຊ້ໃບເກັບເງິນ**

ຜູ້ດຳເນີນທຸລະກິດທີ່ເຂົ້າໃນລະບົບອາກອນມູນຄ່າເພີ່ມ ຕ້ອງຖືບັນຊີຕາມມາດຕະຖານການບັນຊີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ແລະ ນຳໃຊ້ໃບເກັບເງິນທີ່ຖືກຕ້ອງຕາມນິຕິກຳກ່ຽວກັບໃບເກັບເງິນ ທີ່ມີຜົນບັງຄັບໃຊ້ໃນແຕ່ລະໄລຍະ.

**ມາດຕາ 34 ຄວາມສະໝັກໃຈເຂົ້າໃນລະບົບອາກອນມູນຄ່າເພີ່ມ**

ຜູ້ດຳເນີນທຸລະກິດ ທີ່ມີລາຍຮັບທຸລະກິດປະຈຳປີຕ່ຳກວ່າ 400.000.000 ກີບ ທີ່ປະຕິບັດການຖືບັນຊີຕາມມາດຕະຖານການບັນຊີ, ນຳໃຊ້ໃບເກັບເງິນ ແລະ ໃບຢັ້ງຢືນອື່ນຢ່າງຖືກຕ້ອງ ສາມາດຍື່ນຄຳຮ້ອງສະໝັກເຂົ້າໃນລະບົບອາກອນມູນຄ່າເພີ່ມ ນຳລັດຖະການສ່ວຍສາອາກອນໄດ້.

**ມາດຕາ 35(ໃໝ່) ອາກອນມູນຄ່າເພີ່ມສຳລັບຜູ້ທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ**

ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຫາກໄດ້ຮັບການສະໜອງການບໍລິການຈາກຜູ້ທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຕ້ອງຄິດໄລ່ຫັກອາກອນມູນຄ່າເພີ່ມໄວ້ໃນເວລາທີ່ຈະມີການຊຳລະເງິນ ໃຫ້ແກ່ ຜູ້ທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງຢູ່ ສປປ ລາວ ແລະ ໃຫ້ມອບອາກອນມູນຄ່າເພີ່ມພ້ອມດຽວກັນ ກັບເວລາແຈ້ງມອບອາກອນປົກກະຕິ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 36 ຂອງກົດໝາຍສະບັບນີ້.

ຜູ້ດຳເນີນທຸລະກິດທີ່ບໍ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຫາກໄດ້ຮັບການສະໜອງການບໍລິການ ຈາກຜູ້ທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງຢູ່ ສປປ ລາວ ຕ້ອງຄິດໄລ່ຫັກອາກອນມູນຄ່າເພີ່ມມອບໃຫ້ລັດພາຍໃນກຳນົດ ສິບວັນ ນັບແຕ່ວັນໄດ້ຊຳລະເງິນໃຫ້ແກ່ຜູ້ທີ່ບໍ່ມີພູມລຳເນົາດັ່ງກ່າວ.

ການສະໜອງສິນຄ້າ ຫຼື ການບໍລິການ ໂດຍບຸກຄົນໃດໜຶ່ງໃນນາມເປັນຕົວແທນ ຫຼື ຜູ້ຕາງໜ້າໃຫ້ແກ່ບຸກຄົນອື່ນ ຊຶ່ງເປັນເຈົ້າຂອງກິດຈະການທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຖືວ່າແມ່ນການດຳເນີນກິດຈະການທີ່ຕ້ອງເສຍອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

## ພາກທີ IV
## ການຈັດຕັ້ງປະຕິບັດ
### ໝວດທີ 1
### ການແຈ້ງ ແລະ ການມອບ ອາກອນມູນຄ່າເພີ່ມ

**ມາດຕາ 36(ປັບປຸງ) ການແຈ້ງອາກອນມູນຄ່າເພີ່ມ**

ການແຈ້ງອາກອນມູນຄ່າເພີ່ມ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດ ຢູ່ໃນລະບົບອາກອນມູນຄ່າເພີ່ມ ຕ້ອງຍື່ນໃບແຈ້ງອາກອນມູນຄ່າເພີ່ມ ພ້ອມທັງຕາຕະລາງລາຍງານການນຳໃຊ້ໃບເກັບເງິນເປັນແຕ່ລະເດືອນ ແລະ ບໍ່ໃຫ້ກາຍ ວັນທີ 15 ຂອງເດືອນຖັດໄປ ຫຼື ເປັນງວດ ບໍ່ໃຫ້ກາຍວັນທີ 15 ຂອງເດືອນທີໜຶ່ງ ງວດຖັດໄປ ຕໍ່ຂະແໜງການສ່ວຍສາອາກອນບ່ອນຕົນຂຶ້ນກັບ;
2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ນຳເຂົ້າສິນຄ້າ ຕ້ອງຍື່ນໃບແຈ້ງອາກອນມູນຄ່າເພີ່ມ ໃນເວລາມີການນຳເຂົ້າສິນຄ້າ ພ້ອມກັນກັບການຍື່ນໃບແຈ້ງເສຍພາສີຂາເຂົ້າຢູ່ດ່ານບ່ອນນຳເຂົ້າ.

ລະບຽບການ, ຂັ້ນຕອນ, ແບບພິມໃບແຈ້ງ ແລະ ແບບພິມຕາຕະລາງລາຍງານການນຳໃຊ້ໃບເກັບເງິນ ມອບໃຫ້ກະຊວງການເງິນເປັນຜູ້ກຳນົດ.

**ມາດຕາ 37(ປັບປຸງ) ການມອບອາກອນມູນຄ່າເພີ່ມ**

ການມອບອາກອນມູນຄ່າເພີ່ມ ໃຫ້ປະຕິບັດ ດັ່ງນີ້:

1. ສໍາລັບການນໍາເຂົ້າສິນຄ້າ ເວັ້ນເສຍແຕ່ສິນຄ້າ ທີ່ໄດ້ກໍານົດໄວ້ໃນມາດຕາ 12 ແລະ ມາດຕາ 16 ຂໍ້ 2 ຂອງກົດໝາຍສະບັບນີ້ ໃຫ້ມອບຢູ່ດ່ານບ່ອນນໍາສິນຄ້າເຂົ້າ, ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ;

2. ສໍາລັບຜູ້ດໍາເນີນທຸລະກິດພາຍໃນປະເທດ ທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ນັ້ນໃຫ້ມອບເປັນແຕ່ລະເດືອນ ບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ຢູ່ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ;

3. ສໍາລັບຜູ້ຊື້ການບໍລິການຈາກຜູ້ທີ່ບໍ່ມີພູມລໍາເນົາ ແລະ ບໍ່ໄດ້ສ້າງຕັ້ງ ຢູ່ ສປປ ລາວ ນັ້ນໃຫ້ມອບພາຍໃນກໍານົດ ສິບວັນ ລັດຖະການ ນັບແຕ່ວັນໄດ້ຫັກອາກອນດັ່ງກ່າວໄວ້ ແລະ ໃຫ້ມອບເຂົ້າ ຢູ່ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ.

ອາກອນມູນຄ່າເພີ່ມທີ່ມອບໃນແຕ່ລະຄັ້ງ ຕ້ອງມອບເປັນເງິນກີບ, ຖ້າມອບເປັນເງິນຕາຕ່າງ ປະເທດ ຕ້ອງຄິດໄລ່ເປັນເງິນກີບ ຕາມອັດຕາແລກປ່ຽນທາງການ ຂອງທະນາຄານ ຢູ່ ສປປ ລາວ ທີ່ກໍານົດອອກໃນແຕ່ລະໄລຍະ.

## ໝວດທີ 2
## ການຖືບັນຊີ ແລະ ການອອກໃບເກັບເງິນ

**ມາດຕາ 38 ການຖືບັນຊີ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຕ້ອງຖືບັນຊີໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍ ການບັນຊີ ຂອງ ສປປ ລາວ ຫຼື ຕາມການຕົກລົງຂອງຂະແໜງການທີ່ກ່ຽວຂ້ອງ.

ຂໍ້ມູນຢັ້ງຢືນການລົງບັນຊີ, ເອກະສານການບັນຊີ ຕ້ອງເກັບຮັກສາໄວ້ພາຍໃນກໍານົດ ສິບປີ ແລະ ໃຫ້ນໍາສະເໜີໄດ້ທຸກເວລາ ຖ້າຫາກມີການກວດກາຂອງເຈົ້າໜ້າທີ່ສ່ວຍສາອາກອນ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ.

**ມາດຕາ 39(ປັບປຸງ) ການອອກໃບເກັບເງິນ**

ໃບເກັບເງິນ ແມ່ນ ເອກະສານຢັ້ງຢືນ ການລົງບັນຊີ, ການຊື້-ຂາຍ ສິນຄ້າ ແລະ ການບໍລິການ, ການຈ່າຍອາກອນມູນຄ່າເພີ່ມໃນເວລາຊື້ (ອາກອນເບື້ອງສິ້ນເຂົ້າ), ການເກັບອາກອນມູນຄ່າເພີ່ມເວລາຂາຍ (ອາກອນເບື້ອງສິ້ນອອກ), ການຫັກ ແລະ ການຂໍຄືນ ເງິນອາກອນມູນຄ່າເພີ່ມ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທຸກຄັ້ງທີ່ມີການຊື້-ຂາຍ ສິນຄ້າ ແລະ ການບໍລິການ ຕ້ອງອອກໃບເກັບເງິນໃຫ້ແກ່ຜູ້ຊື້ ໃຫ້ຖືກຕ້ອງຕາມນິຕິກໍາ ກ່ຽວກັບໃບເກັບເງິນ.

# ໝວດທີ 3
# ການກວດກາ ແລະ ການຄຸ້ມຄອງອາກອນມູນຄ່າເພີ່ມຄ້າງມອບ

### ມາດຕາ 40 ການກວດກາບັນຊີ

ການກວດກາບັນຊີຂອງຜູ້ດໍາເນີນທຸລະກິດ ທີ່ຖືກເສຍອາກອນມູນຄ່າເພີ່ມ ແນໃສ່ຮັບປະກັນການປະຕິບັດພັນທະ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ.

ການກວດກາ ສາມາດດໍາເນີນ ຢູ່ໃນສະຖານທີ່ ດັ່ງນີ້:

1. ການກວດກາເອກະສານບັນຊີ ຂອງຜູ້ດໍາເນີນທຸລະກິດຢູ່ຫ້ອງການສ່ວຍສາອາກອນ;
2. ການກວດກາບັນຊີກັບທີ່ ຢູ່ ສໍານັກງານຂອງຜູ້ດໍາເນີນທຸລະກິດ;
3. ການກວດກາຕົວຈິງ ຢູ່ ສະຖານທີ່ກ່ຽວຂ້ອງ ເຊັ່ນ ການກວດກາສິນຄ້າຢູ່ສາງ, ການກວດກາການເຄື່ອນຍ້າຍສິນຄ້າ ຢູ່ ພາຍໃນປະເທດ.

ການກວດກາ ສາມາດດໍາເນີນການຕາມຮູບການ ປົກກະຕິ, ແຈ້ງໃຫ້ຮູ້ລ່ວງໜ້າ ແລະ ກະທັນຫັນ.

ຜູ້ຖືກກວດກາຕ້ອງໃຫ້ຄວາມຮ່ວມມືໃນການກວດກາຂອງເຈົ້າໜ້າທີ່. ພາຍຫຼັງສໍາເລັດການກວດກາທຸກຄັ້ງແລ້ວ ເຈົ້າໜ້າທີ່ກວດກາຕ້ອງເຮັດບົດບັນທຶກການກວດກາເປັນລາຍລັກອັກສອນໂດຍຊ້ອງໜ້າຜູ້ດໍາເນີນທຸລະກິດທີ່ຖືກກວດກາ, ຫຼັງຈາກນັ້ນ ຕ້ອງອ່ານ ຫຼື ໃຫ້ຜູ້ກ່ຽວອ່ານເອງບົດບັນທຶກດັ່ງກ່າວ ພ້ອມທັງລົງລາຍເຊັນໄວ້ເປັນຫຼັກຖານ.

ໃນການກວດການັ້ນ ເຈົ້າໜ້າທີ່ກວດກາຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

### ມາດຕາ 41(ໃໝ່) ການຄຸ້ມຄອງອາກອນມູນຄ່າເພີ່ມຄ້າງມອບ

ອາກອນມູນຄ່າເພີ່ມຄ້າງມອບ ແມ່ນ ອາກອນມູນຄ່າເພີ່ມທີ່ຜູ້ມອບອາກອນບໍ່ທັນໄດ້ຈ່າຍ ຊຶ່ງມີ:

1. ອາກອນມູນຄ່າເພີ່ມຈາກການແຈ້ງທີ່ຍັງບໍ່ທັນໄດ້ມອບ;
2. ອາກອນມູນຄ່າເພີ່ມຈາກການກວດກາ ຫຼື ກໍລະນີອື່ນ ທີ່ຜູ້ມອບອາກອນບໍ່ທັນໄດ້ມອບ.

ການຄຸ້ມຄອງອາກອນມູນຄ່າເພີ່ມຄ້າງມອບ ແມ່ນ ການບັນທຶກ ຕິດຕາມເປົ້າໝາຍ, ຈໍານວນເງິນອາກອນມູນຄ່າເພີ່ມທີ່ຄ້າງມອບ ເພື່ອເລັ່ງທວງເກັບເຂົ້າງົບປະມານໃຫ້ຄົບຖ້ວນ.

### ມາດຕາ 42(ໃໝ່) ການປະຕິບັດມາດຕະການ ກ່ຽວກັບອາກອນມູນຄ່າເພີ່ມທີ່ຄ້າງມອບ

ພາຍຫຼັງໄດ້ດໍາເນີນການປະຕິບັດມາດຕະການ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້ແລ້ວ ແຕ່ຜູ້ດໍາເນີນທຸລະກິດຍັງບໍ່ຈ່າຍນັ້ນ ລັດຖະການສ່ວຍສາອາກອນມີໜ້າທີ່ປະຕິ ບັດມາດຕະການ ຕາມຂັ້ນຕອນ ດັ່ງນີ້:

1. ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອໂຈະການດໍາເນີນທຸລະກິດຊົ່ວຄາວເປັນເວລາໜຶ່ງເດືອນ;

2. ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອຖອນໃບທະບຽນວິສາຫະກິດ, ໃບທະບຽນສຳປະທານ ແລະ ໃບອະນຸຍາດຂອງຂະແໜງການທີ່ກ່ຽວຂ້ອງ.

## ພາກທີ V
## ສິດ ແລະ ໜ້າທີ່ຂອງຜູ້ມອບອາກອນມູນຄ່າເພີ່ມ

### ມາດຕາ 43(ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ມອບອາກອນມູນຄ່າເພີ່ມ

ສິດ ແລະ ໜ້າທີ່ ຂອງຜູ້ມອບອາກອນມູນຄ່າເພີ່ມ ມີ ດັ່ງນີ້:

1. ສິດ ຂອງຜູ້ມອບອາກອນມູນຄ່າເພີ່ມ:

- ໄດ້ຮັບການສະໜອງຂໍ້ມູນຂ່າວສານ, ການຊີ້ແຈງ, ການອະທິບາຍ ແລະ ການໃຫ້ຄຳແນະນຳ ກ່ຽວກັບອາກອນມູນຄ່າເພີ່ມ;
- ໄດ້ຮັບການຮັກສາຄວາມລັບ ກ່ຽວກັບຂໍ້ມູນຂອງຜູ້ມອບອາກອນມູນຄ່າເພີ່ມ;
- ໄດ້ຮັບເງິນອາກອນມູນຄ່າເພີ່ມທີ່ມອບເກີນນັ້ນຄືນ ຕາມກົດໝາຍ ແລະ ລະບຽບການ;
- ຮ້ອງທຸກ ກ່ຽວກັບການກະທຳຂອງເຈົ້າໜ້າທີ່, ພະນັກງານສ່ວຍສາອາກອນ ຫຼື ການຈັດຕັ້ງທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
- ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

2. ໜ້າທີ່ຂອງຜູ້ມອບອາກອນມູນຄ່າເພີ່ມ:

- ຄິດໄລ່, ແຈ້ງ ແລະ ມອບອາກອນມູນຄ່າເພີ່ມໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
- ຮັບຜິດຊອບຕໍ່ການແຈ້ງ, ການຄິດໄລ່, ການເກັບ, ການຂໍຫັກ, ການຂໍຄືນອາກອນມູນຄ່າເພີ່ມໃຫ້ຊັດເຈນ ແລະ ຖືກຕ້ອງ ຕາມຄວາມເປັນຈິງ;
- ລາຍງານບັນຊີເງິນຝາກຂອງຕົນຢູ່ ຄັງເງິນ, ທະນາຄານ ແລະ ສະຖາບັນການເງິນອື່ນໃຫ້ແກ່ຂະແໜງການສ່ວຍສາອາກອນ;
- ຖືບັນຊີ ແລະ ນຳໃຊ້ໃບເກັບເງິນ ຕາມກົດໝາຍ ແລະ ລະບຽບການ;
- ສະໜອງເອກະສານບັນຊີ, ໃບເກັບເງິນ, ໃບຢັ້ງຢືນຖານະການເງິນ ແລະ ເອກະສານອື່ນ ທີ່ພົວພັນກັບການຄິດໄລ່ ແລະ ການກວດກາບັນຊີ ໃຫ້ແກ່ຂະແໜງການສ່ວຍສາອາກອນ ຕາມລະບຽບການ;
- ປະຕິບັດຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຂະແໜງການສ່ວຍສາອາກອນ ໃນການມອບອາກອນມູນຄ່າເພີ່ມຄ້າງມອບ ແລະ ຄ່າປັບໃໝ, ຖ້າຫາກຍັງບໍ່ເອົາໃຈໃສ່ ແລະ ບໍ່ໃຫ້ຄວາມຮ່ວມມື ກໍຕ້ອງຍິນຍອມໃຫ້ຍຶດ ຫຼື ອາຍັດຊັບສິນທີ່ຕົນມີ ຊຶ່ງມີມູນຄ່າເທົ່າກັບຈຳນວນເງິນອາກອນມູນຄ່າເພີ່ມທີ່ຕົນຄ້າງມອບ;
- ຮັກສາ ແລະ ເກັບມ້ຽນເອກະສານການບັນຊີ ຕາມກົດໝາຍ ແລະ ລະບຽບການ;
- ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 44(ໃໝ່) ສິດ ແລະ ໜ້າທີ່ຂອງບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ**

ສິດ ແລະ ໜ້າທີ່ຂອງບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ມີ ດັ່ງນີ້:

1. ສິດຂອງບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ:

- ຕິດຕາມ, ກວດກາ ການຄິດໄລ່, ການເກັບ, ການຫັກ, ການມອບ ແລະ ການສົ່ງຄືນອາກອນມູນຄ່າເພີ່ມ;
- ໄດ້ຮັບການປົກປ້ອງ ແລະ ຮັກສາຄວາມລັບກ່ຽວກັບອາກອນມູນຄ່າເພີ່ມຕາມກົດໝາຍ ແລະ ລະບຽບການ;
- ຮັກສາ ແລະ ເກັບມ້ຽນເອກະສານກ່ຽວກັບອາກອນມູນຄ່າເພີ່ມ ຕາມກົດໝາຍ ແລະ ລະບຽບການ;
- ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ໜ້າທີ່ຂອງບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ:

- ສະໜອງຂໍ້ມູນຂ່າວສານກ່ຽວກັບຜູ້ມອບອາກອນມູນຄ່າເພີ່ມ;
- ແຈ້ງ ແລະ ລາຍງານການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບອາກອນມູນຄ່າເພີ່ມຕໍ່ຂະແໜງການສ່ວຍສາອາກອນ;
- ໃຫ້ຄວາມຮ່ວມມື ແລະ ຊ່ວຍເຫຼືອແກ່ຂະແໜງການສ່ວຍສາອາກອນ ຕາມພາລະບົດບາດຂອງຕົນ;
- ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 45(ໃໝ່) ຂໍ້ຫ້າມ ສຳລັບພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

**ຫ້າມພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີ ພຶດຕິກຳ ດັ່ງນີ້:**

- ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂໍ້ມູນທີ່ເປັນຄວາມລັບຂອງຜູ້ເສຍອາກອນ;
- ກົດໜ່ວງ ຖ່ວງດຶງ, ປອມແປງເອກະສານ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;
- ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;
- ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່, ທວງເອົາ, ຂໍເອົາ ຫຼື ຮັບສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສັຍຫາຍແກ່ຜົນປະໂຫຍດຂອງບຸກຄົນ, ການຈັດຕັ້ງ, ລວມ ໝູ່ ແລະ ລັດ ;
- ປົກປ້ອງ ຫຼື ສົມຮູ້ຮ່ວມຄິດກັບຜູ້ດຳເນີນທຸລະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;
- ເກັບອາກອນມູນຄ່າເພີ່ມ ໂດຍບໍ່ແມ່ນໜ້າທີ່ຮັບຜິດຊອບຂອງຕົນ ຫຼື ບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;
- ນຳເອົາເງິນອາກອນທີ່ເກັບໄດ້ໄປນຳໃຊ້ສ່ວນຕົວ ໂດຍບໍ່ມອບເຂົ້າງົບປະມານແຫ່ງ ລັດ;
- ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 46(ໃໝ່) ຂໍ້ຫ້າມສຳລັບຜູ້ເສັຍ ແລະ ຜູ້ມອບອາກອນມູນຄ່າເພີ່ມ**

**ຫ້າມ ຜູ້ເສັຍ ແລະ ຜູ້ມອບອາກອນມູນຄ່າເພີ່ມ ມີພຶດຕິກຳ ຕາມແຕ່ລະກໍລະນີ ດັ່ງນີ້:**

- ທຳລາຍ, ປອມແປງ ຂໍ້ມູນຫຼັກຖານ, ປົກປິດ, ເຊື່ອງອຳລາຍຮັບ ແລະ ຊຸກເຊື່ອງຜູ້ກະທຳຜິດທີ່ຕິດພັນກັບການເສັຍອາກອນ;
- ນຳໃຊ້ໃບເກັບເງິນທີ່ບໍ່ຖືກຕ້ອງຕາມແບບພິມຂອງກະຊວງການເງິນ ຫຼື ພິມ, ນຳໃຊ້ແບບພິມທີ່ບໍ່ໄດ້ຮັບອະນຸຍາດ;
- ໃຫ້ສິນບົນ ຫຼື ຄ່າຈ້າງ, ລາງວັນ, ສົມຮູ້ຮ່ວມຄິດເອົາເງິນຂອງລັດ;
- ປອມແປງເອກະສານ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;
- ໝິ່ນປະໝາດ, ບັງຄັບ ນາບຂູ່, ທຳຮ້າຍຮ່າງກາຍ ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ;
- ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 47(ໃໝ່) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ**

**ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:**

- ປະຕິເສດການສະໜອງຂໍ້ມູນຂ່າວສານ ກ່ຽວກັບການກະທຳຜິດ ຫຼື ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;
- ຮ່ວມກັນກະທຳຜິດ, ປົກປິດ ແລະ ຊຸກເຊື່ອງຜູ້ກະທຳຜິດ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;
- ໃຫ້ ຫຼື ຮັບສິນບົນ, ຄ່າຈ້າງ ລາງວັນ, ສົມຮູ້ຮ່ວມຄິດເອົາເງິນຂອງລັດ;
- ໝິ່ນປະໝາດ, ບັງຄັບ ນາບຂູ່, ທຳຮ້າຍຮ່າງກາຍ ພະນັກງານ ແລະ ເຈົ້າໜ້າທີ່ ສ່ວຍສາອາກອນ ຫຼື ຜູ້ເສັຍອາກອນ;
- ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VII
## ການແກ້ໄຂຄຳສະເໜີກ່ຽວກັບອາກອນມູນຄ່າເພີ່ມ

**ມາດຕາ 48 ການຍື່ນຄຳສະເໜີຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ມີສິດຍື່ນຄຳສະເໜີກ່ຽວກັບການປະຕິບັດອາກອນມູນຄ່າເພີ່ມ ທີ່ຕົນເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. ຄຳສະເໜີ ຕ້ອງຍື່ນໂດຍກົງຕໍ່ລັດຖະການສ່ວຍສາອາກອນ ບ່ອນຕົນຂຶ້ນກັບ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບໃບສັ່ງມອບ ຫຼື ແຈ້ງການຂອງລັດຖະການສ່ວຍສາອາກອນ ຫຼື ວັນພົບເຫັນເຫດການ ທີ່ຕົນເຫັນວ່າບໍ່ຖືກຕ້ອງນັ້ນເປັນຕົ້ນໄປ.

ລັດຖະການສ່ວຍສາອາກອນທີ່ໄດ້ຮັບຄຳສະເໜີ ມີສິດທວງໃຫ້ຜູ້ສະເໜີ ສະໜອງບັນດາເອກະສານ, ຂໍ້ມູນຕ່າງໆທີ່ກ່ຽວຂ້ອງກັບການສະເໜີນັ້ນ.

**ມາດຕາ 49 ການພິຈາລະນາແກ້ໄຂຄຳສະເໜີ**

**ຄຳສະເໜີຂອງຜູ້ດຳເນີນທຸລະກິດ ຈະໄດ້ຮັບການພິຈາລະນາແກ້ໄຂ ດັ່ງນີ້:**

1. ລັດຖະການສ່ວຍສາອາກອນ ຕ້ອງພິຈາລະນາແກ້ໄຂພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີນັ້ນເປັນຕົ້ນໄປ, ຍົກເວັ້ນກໍລະນີທີ່ມີຄວາມຫຍຸ້ງຍາກສັບສົນ ສາມາດຕໍ່ກຳນົດເວລານັ້ນໄດ້ ແຕ່ບໍ່ໃຫ້ເກີນ ຫົກສິບ ວັນ;

2. ການຕົກລົງແກ້ໄຂຂອງລັດຖະການສ່ວຍສາອາກອນ ມີຜົນບັງຄັບປະຕິບັດສຳລັບຜູ້ດຳເນີນທຸລະກິດ ເວັ້ນເສັຍແຕ່ຫາກຍັງບໍ່ເຫັນດີນຳການຕົກລົງແກ້ໄຂນັ້ນ ກໍມີສິດສະເໜີຕໍ່ລັດຖະການສ່ວຍສາອາກອນຂັ້ນເທິງຖັດນັ້ນ ພາຍໃນກຳນົດ ຊາວວັນ ເພື່ອພິຈາລະນາແກ້ໄຂເປັນຂັ້ນສຸດທ້າຍ.

ສຳລັບບັນຫາໃດທີ່ບໍ່ຂຶ້ນກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນໃນການແກ້ໄຂນັ້ນ ລັດຖະການສ່ວຍສາອາກອນ ຕ້ອງນຳສົ່ງສຳນວນເອກະສານໄປຍັງອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ.

ໃນກໍລະນີ ທີ່ຜູ້ດຳເນີນທຸລະກິດ ຍັງບໍ່ເຫັນດີນຳການແກ້ໄຂຄຳສະເໜີ ຂອງລັດຖະການສ່ວຍສາອາກອນຂັ້ນສຸດທ້າຍ ກໍມີສິດສະເໜີຕາມກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ.

3. ລັດຖະການສ່ວຍສາອາກອນ ຕ້ອງສົ່ງຈຳນວນເງິນທີ່ຄິດໄລ່ເກີນ ຫຼື ຄ່າປັບໃໝບໍ່ຖືກຕ້ອງຄືນ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນມີການຕົກລົງຂອງລັດຖະການສ່ວຍສາອາກອນຂັ້ນເທິງຖັດນັ້ນເປັນຕົ້ນໄປ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາວຽກງານອາກອນມູນຄ່າເພີ່ມ
### ໝວດທີ 1
### ການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ

**ມາດຕາ 50(ປັບປຸງ) ອົງການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານອາກອນມູນຄ່າເພີ່ມຢ່າງລວມສູນ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນເປັນຜູ້ຮັບຜິດຊອບໂດຍກົງ ຕາມຂະແໜງການສາຍຕັ້ງ ແລະ ເປັນໃຈກາງປະສານສົມທົບ ກັບກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ປະກອບດ້ວຍ:

- ກະຊວງການເງິນ;
- ກົມສ່ວຍສາອາກອນ;
- ສ່ວຍສາອາກອນ ປະຈຳແຂວງ, ນະຄອນ;
- ສ່ວຍສາອາກອນ ປະຈຳເມືອງ, ເທດສະບານ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ແຜນການ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານອາກອນມູນຄ່າເພີ່ມ ເພື່ອສະເໜີລັດຖະບານພິຈາລະນາ;

2. ໂຄສະນາ ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ຕາມພາລະບົດບາດຂອງຕົນ;

3. ຝຶກອົບຮົມ, ໃຫ້ຄຳແນະນຳ ແກ່ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ແນໃສ່ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການເຂົ້າໃນລະບົບອາກອນມູນຄ່າເພີ່ມ;

4. ຊີ້ນຳ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳອື່ນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ແລະ ການປະຕິບັດໜ້າທີ່ຂອງ ພະນັກງານ ຫຼື ເຈົ້າໜ້າທີ່ ສ່ວຍສາອາກອນ;

5. ຊີ້ນຳວຽກງານວິຊາສະເພາະ, ຄຸ້ມຄອງ, ສ້າງ, ຍົກລະດັບວິຊາການໃຫ້ແກ່ບຸກຄະລາກອນ, ສະໜອງງົບປະມານ ແລະ ປະກອບພາຫະນະ, ອຸປະກອນເຕັກນິກຮັບໃຊ້ກິດຈະກຳອາກອນມູນຄ່າເພີ່ມ;

6. ປະສານສົມທົບກັບ ເຈົ້າແຂວງ, ເຈົ້າຄອງນະຄອນ ໃນການ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ພະນັກງານທີ່ຮັບຜິດຊອບວຽກງານອາກອນມູນຄ່າເພີ່ມ;

7. ປະສານສົມທົບ ກັບບັນດາອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງກັບວຽກງານອາກອນມູນຄ່າເພີ່ມ;

8. ແກ້ໄຂຄຳສະເໜີຂອງຜູ້ດຳເນີນທຸລະກິດ ໃນຂອບເຂດທົ່ວປະເທດ;

9. ຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານອາກອນມູນຄ່າເພີ່ມ ໃນຂອບເຂດທົ່ວປະເທດ;

10. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;

11. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານອາກອນມູນຄ່າເພີ່ມ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງກົມສ່ວຍສາອາກອນ**

ກົມສ່ວຍສາອາກອນ ເປັນເສນາທິການໃຫ້ກະຊວງການເງິນ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງກະຊວງການເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້, ນອກຈາກນີ້ກໍຍັງມີສິດ ແລະ ໜ້າທີ່ໃນການຈັດຕັ້ງ, ຄຸ້ມຄອງ ວຽກງານອາກອນມູນຄ່າເພີ່ມ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງສ່ວຍສາອາກອນປະຈຳແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ສ່ວຍສາອາກອນປະຈຳແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນ ໃສ່ຮ່າງແຜນຍຸດທະສາດ, ແຜນນະໂຍບາຍ, ແຜນການ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;

2. ໂຄສະນາ ເຜີຍແຜ່ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ທີ່ພົວພັນກັບວຽກງານອາ ກອນມູນຄ່າເພີ່ມ ;

3. ຝຶກອົບຮົມ, ໃຫ້ຄຳແນະນຳ ແກ່ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ແນໃສ່ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການເຂົ້າໃນລະບົບອາກອນມູນຄ່າເພີ່ມ;

4. ສ້າງແຜນການເກັບລາຍຮັບຈາກອາກອນມູນຄ່າເພີ່ມປະຈຳປີ ຂອງແຂວງ, ນະຄອນ;

5. ຮັບຜິດຊອບຕໍ່ກະຊວງການເງິນ ໃນການຄຸ້ມຄອງການຈັດຕັ້ງປະຕິບັດການເກັບອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;

6. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ກວດກາ ການປະຕິບັດໜ້າທີ່ຂອງສ່ວຍສາອາກອນ ປະຈຳເມືອງ, ເທດສະບານ ແລະ ພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ທີ່ຂຶ້ນກັບຕົນ;

7. ສະເໜີຕໍ່ລັດຖະມົນຕີວ່າການກະຊວງການເງິນ ເພື່ອພິຈາລະນາ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ທີ່ຂຶ້ນກັບຕົນ ໂດຍປະສານສົມທົບກັບເຈົ້າແຂວງ, ເຈົ້າຄອງນະຄອນ;

8. ສະເໜີຕໍ່ລັດຖະມົນຕີວ່າການກະຊວງການເງິນ ເພື່ອພິຈາລະນາຍ້ອງຍໍຜູ້ມີຜົນງານ ແລະ ລົງວິໄນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ໂດຍປະສານສົມທົບກັບເຈົ້າແຂວງ, ເຈົ້າຄອງນະຄອນ;

9. ແກ້ໄຂຄຳສະເໜີຂອງຜູ້ດຳເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການ;

10. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານອາກອນມູນຄ່າເພີ່ມ ຕໍ່ກະຊວງການເງິນ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງສ່ວຍສາອາກອນ ປະຈຳເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ສ່ວຍສາອາກອນປະຈຳເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນ ໃສ່ຮ່າງແຜນຍຸດທະສາດ, ແຜນນະໂຍບາຍ, ແຜນການ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;

2. ເຜີຍແຜ່ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ທີ່ພົວພັນກັບວຽກງານອາກອນມູນຄ່າເພີ່ມ;

3. ຝຶກອົບຮົມ, ໃຫ້ຄຳແນະນຳ ແກ່ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ແນໃສ່ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການເຂົ້າໃນລະບົບອາກອນມູນຄ່າເພີ່ມ;

4. ເປັນເຈົ້າການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ເກັບອາກອນມູນຄ່າເພີ່ມ ໃນຂອບເຂດເມືອງ, ເທດສະບານ ຂອງຕົນ;

5. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດໜ້າທີ່ ຂອງພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ທີ່ຂຶ້ນກັບຕົນ;

6. ແກ້ໄຂຄຳສະເໜີຂອງຜູ້ດຳເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການ;

7. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານອາກອນມູນຄ່າເພີ່ມ ຕໍ່ສ່ວຍສາອາກອນປະຈຳແຂວງ, ນະຄອນ, ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ການກວດກາວຽກງານອາກອນມູນຄ່າເພີ່ມ

### ມາດຕາ 55 ອົງການກວດກາວຽກງານອາກອນມູນຄ່າເພີ່ມ

ອົງການກວດກາວຽກງານອາກອນມູນຄ່າເພີ່ມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງມີ:

- ສະພາແຫ່ງຊາດ;
- ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ;
- ອົງການກວດສອບແຫ່ງລັດ;
- ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີໜ້າທີ່ເຂົ້າຮ່ວມໃນການກວດກາການຈັດຕັ້ງປະຕິບັດອາກອນມູນຄ່າເພີ່ມຕາມພາລະບົດບາດຂອງຕົນ.

### ມາດຕາ 56 ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍໃນ

ອົງການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ກວດກາຢ່າງເປັນປົກກະຕິ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ແຕ່ລະຂັ້ນ ແລະ ນຳໃຊ້ສິດ ແລະ ປະຕິບັດພັນທະຂອງຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາ

ກອນມູນຄ່າເພີ່ມ ເປັນຕົ້ນ ການຖືບັນຊີ, ການນໍາໃຊ້ໃບເກັບເງິນ, ການຄິດໄລ່, ການເກັບ, ການຫັກ, ການແຈ້ງ, ການມອບ ແລະ ການສົ່ງຄືນອາກອນມູນຄ່າເພີ່ມ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີ ສິດ ແລະ ໜ້າທີ່ ກວດກາການປະຕິບັດໜ້າທີ່ຂອງພະນັກງານທີ່ຮັບຜິດຊອບວຽກງານອາກອນມູນຄ່າເພີ່ມ ລວມທັງກວດກາການປະຕິບັດອາກອນມູນຄ່າເພີ່ມຂອງອົງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ວຽກງານອາກອນມູນຄ່າເພີ່ມ ມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ຍຸຕິທໍາ.

**ມາດຕາ 58 ຮູບການກວດກາວຽກງານອາກອນມູນຄ່າເພີ່ມ**

ການກວດກາວຽກງານອາກອນມູນຄ່າເພີ່ມ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

ໃນການກວດກາວຽກງານອາກອນມູນຄ່າເພີ່ມ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ
### ໝວດທີ 1
### ນະໂຍບາຍຕໍ່ຜູ້ມີຜົນງານ

**ມາດຕາ 59 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ໃຫ້ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ນະໂຍບາຍຕໍ່ຜູ້ມອບອາກອນ**

ຜູ້ມອບອາກອນມູນຄ່າເພີ່ມ ທີ່ປະຕິບັດພັນທະຂອງຕົນຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບຄວາມສະດວກຕ່າງໆຢ່າງເໝາະສົມໃນການເຄື່ອນໄຫວທຸລະກິດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 61 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບອາກອນມູນຄ່າເພີ່ມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ດຳເນີນຄະດີທາງແພ່ງ ຫຼື ທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

### ມາດຕາ 62(ໃໝ່) ມາດຕະການຕໍ່ຜູ້ບໍ່ເຂົ້າໃນລະບົບອາກອນມູນຄ່າເພີ່ມ

ຜູ້ດຳເນີນທຸລະກິດທີ່ມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍສະບັບນີ້ ແຕ່ບໍ່ເຂົ້າໃນລະບົບອາກອນມູນຄ່າເພີ່ມນັ້ນ ຂະແໜງການສ່ວຍສາອາກອນ ຈະແຈ້ງເປັນລາຍລັກອັກສອນສູງສຸດ ສາມຄັ້ງ ເພື່ອໃຫ້ຜູ້ດຳເນີນທຸລະກິດດັ່ງກ່າວຊາບ ແລະ ໃຫ້ມາເຂົ້າໃນລະບົບອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຊຶ່ງແຕ່ລະຄັ້ງທີ່ອອກແຈ້ງການນັ້ນ ຜູ້ດຳເນີນທຸລະກິດ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ຖືກກ່າວເຕືອນ ພ້ອມທັງແຈ້ງເປັນລາຍລັກອັກສອນໃຫ້ມາເຂົ້າໃນລະບົບອາກອນມູນຄ່າເພີ່ມ, ຖ້າຫາກບໍ່ປະຕິບັດຕາມແຈ້ງການ ຄັ້ງທີ 1;
2. ຖືກປັບໃໝ 1.000.000 ກີບ (ໜຶ່ງລ້ານກີບ) ພ້ອມທັງແຈ້ງເປັນລາຍລັກອັກສອນໃຫ້ມາຂໍຈົດທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມ ຖ້າຫາກບໍ່ປະຕິບັດຕາມແຈ້ງການ ຄັ້ງທີ 2;
3. ຖືກປັບໃໝ 2.000.000 ກີບ (ສອງລ້ານກີບ) ຖ້າຫາກບໍ່ປະຕິບັດຕາມແຈ້ງການ ຄັ້ງທີ 3.

ພາຍຫຼັງຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ເທິງນີ້ເຖິງ ສາມຄັ້ງ ແຕ່ກໍຍັງບໍ່ມາຈົດທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມແລ້ວ ຂະແໜງການສ່ວຍສາອາກອນ ມີສິດສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາຖອນໃບອະນຸຍາດສຳປະທານ, ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດ ລວມທັງພິຈາລະນາມາດຕະການອື່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 63(ປັບປຸງ) ມາດຕະການຕໍ່ຜູ້ຢູ່ໃນລະບົບອາກອນມູນຄ່າເພີ່ມ

ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຖືກປັບໃໝ 100.000 ກີບ ສຳລັບການລະເມີດແຕ່ລະຄັ້ງ ໃນກໍລະນີບໍ່ປະກອບເລກປະຈຳຕົວ ຜູ້ເສັຍອາກອນ ທີ່ຂະແໜງການສ່ວຍສາອາກອນອອກໃຫ້ ໃສ່ໃນໃບແຈ້ງອາກອນມູນຄ່າເພີ່ມ;
2. ຖືກປັບໃໝ 3.000.000 ກີບ ສຳລັບການລະເມີດແຕ່ລະຄັ້ງ ໃນກໍລະນີບໍ່ແຈ້ງ ກ່ຽວກັບການປ່ຽນແປງຂໍ້ມູນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
3. ການຍື່ນໃບແຈ້ງອາກອນມູນຄ່າເພີ່ມ ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຈະຖືກປັບໃໝ:

- ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຕໍ່ວັນຂອງຈຳນວນເງິນອາກອນມູນຄ່າເພີ່ມ ທີ່ຕ້ອງມອບ ໃນກໍລະນີຍື່ນໃບແຈ້ງອາກອນມູນຄ່າເພີ່ມຊັກຊ້າ;

- 500.000 ກີບ ຕໍ່ຄັ້ງ ຕໍ່ເດືອນ ຫຼື ຕໍ່ງວດ ໃນກໍລະນີຍື່ນໃບແຈ້ງອາກອນມູນຄ່າເພີ່ມຊັກຊ້າ ຊຶ່ງບໍ່ມີຈຳນວນເງິນອາກອນມູນຄ່າເພີ່ມທີ່ຕ້ອງມອບ.

4. ຖືກປັບໃໝ 1.500.000 ກີບ ຕໍ່ຄັ້ງ ຕໍ່ເດືອນ ຫຼື ຕໍ່ງວດ ໃນກໍລະນີບໍ່ຍື່ນໃບແຈ້ງອາກອນມູນຄ່າເພີ່ມ ຊຶ່ງໄດ້ມີການອອກໃບເລັ່ງທວງໃຫ້ຍື່ນໃບແຈ້ງແລ້ວ;

5. ຖືກປັບໃໝ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຕໍ່ວັນ ຂອງຈຳນວນເງິນອາກອນມູນຄ່າເພີ່ມທີ່ຄ້າງມອບ ໃນກໍລະນີບໍ່ມອບຈຳນວນເງິນອາກອນທີ່ຕ້ອງມອບຕາມທີ່ໄດ້ກຳນົດໄວ້ໃນໃບແຈ້ງອາກອນມູນຄ່າເພີ່ມ;

6. ຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ໃນກໍລະນີຖືບັນຊີບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເປັນຕົ້ນ ການບໍ່ປະຕິບັດຕາມມາດຕະຖານ ການບັນຊີ, ການບໍ່ປະຕິບັດຕາມລະບຽບການພື້ນຖານ ແລະ ຂໍ້ບັງຄັບໃນການຖືບັນຊີ;

7. ຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳກ່ຽວກັບໃບເກັບເງິນ ໃນກໍລະນີບໍ່ອອກໃບເກັບເງິນ ຫຼື ຂຽນເນື້ອໃນໃສ່ໃບເກັບເງິນບໍ່ຄົບຖ້ວນ;

8. ຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງຈຳນວນເງິນອາກອນມູນຄ່າເພີ່ມທີ່ ຖືກຮຽກເກັບ ຈາກການຂາຍ ໃນກໍລະນີບໍ່ຄິດໄລ່ເກັບອາກອນມູນຄ່າເພີ່ມ ຫຼື ຄິດໄລ່ບໍ່ຖືກຕ້ອງກັບຄວາມເປັນຈິງກັບການຂາຍສິນຄ້າ ຫຼື ການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ແລະ/ຫຼື ບໍ່ແຈ້ງ ກ່ຽວກັບການຂາຍສິນຄ້າ ຫຼື ການບໍລິການ ໃສ່ໃນໃບແຈ້ງອາກອນມູນຄ່າເພີ່ມ ລວມທັງການມອບອາກອນມູນຄ່າເພີ່ມບໍ່ຄົບຖ້ວນ;

9. ຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງຈຳນວນເງິນອາກອນມູນຄ່າເພີ່ມ ທີ່ໄດ້ຄິດໄລ່ຫັກໄວ້ແລ້ວ ໃນກໍລະນີຫັກອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ ຫຼື ຫັກບໍ່ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

10. ຖືກປັບໃໝ 1,000,000 ກີບ ຕໍ່ການອອກໃບເລັ່ງທວງໜຶ່ງຄັ້ງ ໃນກໍລະນີບໍ່ສະໜອງເອກະສານການບັນຊີ ຫຼື ສະໜອງເອກະສານການບັນຊີທີ່ບໍ່ຖືກຕ້ອງ ແລະ/ຫຼື ບໍ່ຄົບຖ້ວນ, ໃຫ້ຂໍ້ມູນບໍ່ຊັດເຈນ ແລະ/ຫຼື ບໍ່ຖືກຕ້ອງ ກ່ຽວກັບວຽກງານອາກອນມູນຄ່າເພີ່ມໃຫ້ແກ່ລັດຖະການສ່ວຍສາອາກອນຕາມ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

11. ຖືກປັບໃໝ 1.000.000 ກີບ ຕໍ່ການລະເມີດໜຶ່ງຄັ້ງ ໃນກໍລະນີບໍ່ໃຫ້ຄວາມຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ສ່ວຍສາອາກອນ;

12. ຖືກດຳເນີນຄະດີທາງອາຍາ ແລະ ໃຫ້ໃຊ້ແທນຄ່າເສັຍຫາຍ ທີ່ເກີດຂຶ້ນໃນກໍລະນີທີ່ມີການກະທຳຜິດທາງອາຍາ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ.

**ມາດຕາ 64 ມາດຕະການຕໍ່ຜູ້ມີອາກອນມູນຄ່າເພີ່ມຄ້າງມອບ**

ຜູ້ດຳເນີນທຸລະກິດທີ່ບໍ່ມອບອາກອນ, ຄ່າປັບໃໝ ພາຍຫລັງທີ່ໄດ້ຮັບໃບສັ່ງມອບອາກອນມູນຄ່າເພີ່ມ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ປັບໃໝ 30% ຂອງຈຳນວນເງິນອາກອນທີ່ຕ້ອງມອບລວມທັງຄ່າປັບໃໝ ສຳລັບການອອກໃບເລັ່ງທວງຄັ້ງທີໜຶ່ງ, ປັບໃໝ 60% ຂອງຈຳນວນເງິນອາກອນທີ່ຕ້ອງມອບລວມທັງຄ່າປັບໃໝ ສຳລັບການອອກໃບເລັ່ງທວງຄັ້ງທີສອງ ແລະ ປັບໃໝ 100% ຂອງຈຳນວນເງິນອາກອນທີ່ຕ້ອງມອບລວມທັງຄ່າປັບໃໝ ສຳລັບການອອກໃບເລັ່ງທວງຄັ້ງທີສາມ;
- ຖ້າບໍ່ມາມອບອາກອນ ຫລັງຈາກໝົດກຳນົດຂອງໃບເລັ່ງທວງຄັ້ງທີສາມ ໃຫ້ປະຕິບັດມາດຕະການຕາມມາດຕາ 42 ຂອງກົດໝາຍສະບັບນີ້.

**ມາດຕາ 65(ປັບປຸງ) ມາດຕະການຕໍ່ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ທີ່ຮັບຜິດຊອບວຽກງານອາກອນມູນຄ່າເພີ່ມ ທີ່ລະເມີດ ຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສຶກສາອົບຮົມ ແລະ ກ່າວເຕືອນ ໃນກໍລະນີລະເມີດ ກົດໝາຍ ແລະ ລະບຽບການທີ່ບໍ່ຮ້າຍແຮງ ຫຼື ບໍ່ເປັນການກະທຳຜິດທາງອາຍາ;
2. ລົງວິໄນ ໃນກໍລະນີລະເມີດ ກົດໝາຍ ແລະ ລະບຽບການ ທີ່ບໍ່ຮ້າຍແຮງ, ສ້າງຄວາມເສັຍຫາຍບໍ່ຫຼວງຫຼາຍ ຫຼື ບໍ່ເປັນການກະທຳຜິດທາງອາຍາ;
3. ໃຊ້ແທນຄ່າເສັຍຫາຍ ແລະ ຖືກດຳເນີນຄະດີ ຕາມກໍລະນີເບົາ ຫຼື ໜັກໃນກໍລະນີບໍ່ມີຄວາມຮັບຜິດຊອບ ຫຼື ເມີນເສີຍຕໍ່ໜ້າທີ່ຂອງຕົນ ຊຶ່ງສ້າງຄວາມເສັຍຫາຍຕໍ່ຜົນປະໂຫຍດຂອງລັດ ຫຼື ຂອງຜູ້ມອບອາກອນ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 66 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 67(ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 04/ສພຊ ລົງວັນທີ 26 ທັນວາ 2006.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້